# ໃບສະໝັກຂໍ CALFRESH, ການຊ່ວຍເຫຼືອເງິນສົດ, ແລະ/ຫຼື ໂຄງການ MEDI-CAL/HEALTH CARE (ການດູແລສຸຂະພາບ)

ຖ້າທ່ານມີຄວາມພິການ ຫຼືຕ້ອງການຄວາມຊ່ວຍເຫຼືອດ້ວຍການສະໝັກນີ້, ຈົ່ງໃຫ້ທາງກົມສະຫວັດດີການຂອງຄາວຕີ້ (ຄາວຕີ້) ຮູ້ ແລະຈະມີຄົນຊ່ວຍເຫຼືອທ່ານ. ຖ້າທ່ານຢາກທີ່ຈະເວົ້າ, ອ່ານ, ຫຼືຂຽນເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ, ຄາວຕີ້ຈະຈັດຄົນໃຫ້ຊ່ວຍທ່ານ ໂດຍທີ່ທ່ານບໍ່ຕ້ອງເສຍຄ່າໃຊ້ຈ່າຍ.

## ຂ້ອຍຈະສະໝັກໄດ້ແນວໃດ?

ໃຊ້ໃບສະໝັກນີ້ ຖ້າທ່ານກຳລັງສະໝັກຂໍການຊ່ວຍເຫຼືອດ້ານອາຫານ (CalFresh), ການຊ່ວຍເຫຼືອເງິນສົດ (ໂອກາດການເຮັດວຽກ ແລະຄວາມຮັບຜິດຊອບຕໍ່ເດັກນ້ອຍ ຫຼືການຊ່ວຍເຫຼືອເງິນສົດຜູ້ລີ້ໄພຂອງລັດຄາລິຟໍເນຍ, ໂຄງການຊ່ວຍເຫຼືອທົ່ວໄປ ຫຼື ໂຄງການບັນເທົາທຸກທົ່ວໄປ) Medi-Cal ແລະ/ຫຼືໂຄງການດູແລສຸຂະພາບອື່ນໆ. ຖ້າທ່ານຕ້ອງການສະໝັກຂໍ CalFresh ເທົ່ານັ້ນ, ທ່ານສາມາດຖາມທາງຄາວຕີ້ໄດ້ສຳລັບໃບສະໝັກຂໍ CalFresh ເທົ່ານັ້ນ. CalFresh ແມ່ນໂຄງການຊ່ວຍເຫຼືອດ້ານອາຫານ ເພື່ອຊ່ວຍເຫຼືອທ່ານທາງດ້ານຄ່າຊື້ອາຫານໃຫ້ກັບຄອບຄົວຂອງທ່ານ. ຖ້າທ່ານຕ້ອງການສະໝັກຂໍການດູແລສຸຂະພາບເທົ່ານັ້ນ, ທ່ານສາມາດຖາມທາງຄາວຕີ້ໄດ້ສຳລັບໃບສະໝັກຂໍການດູແລສຸຂະພາບເທົ່ານັ້ນ. ການດູແລສຸຂະພາບລວມມີ: ການປະກັນໄພລາຄາຕ່ຳສຳລັບ Medi-Cal; ການປະກັນໄພສຸຂະພາບສ່ວນຕົວທີ່ສາມາດຊື້ໄດ້; ຫຼືສິນເຊື່ອພາສີທີ່ສາມາດຊ່ວຍທ່ານຈ່າຍຄ່າປະກັນໄພຂອງທ່ານສຳລັບການຄຸ້ມຄອງສຸຂະພາບ. ຢ່າໃຊ້ໃບສະໝັກນີ້ ຖ້າທ່ານສະໝັກຂໍແຕ່ການດູແລສຸຂະພາບເທົ່ານັ້ນ. ຄາວຕີ້ຂອງທ່ານອາດມີໃບສະໝັກແຍກຕ່າງຫາກ ສຳລັບໂຄງການຊ່ວຍເຫຼືອທົ່ວໄປ ຫຼື ໂຄງການບັນເທົາທຸກທົ່ວໄປ. ຂໍໃຫ້ຖາມທາງຄາວຕີ້ເພື່ອໃຫ້ແນ່ໃຈ.

ທ່ານຍັງສາມາດສະໝັກຂໍໂຄງການເຫຼົ່ານີ້ທາງອອນໄລນ໌ໄດ້ ໂດຍການໄປທີ່ http://www.benefitscal.org/.

- ປະກອບໃສ່ແບບຟອມໃບສະໝັກທັງໝົດ, ຖ້າທ່ານສາມາດເຮັດໄດ້. ຢ່າງໜ້ອຍທ່ານຕ້ອງປະກອບຊື່, ທີ່ຢູ່, ແລະລາຍເຊັນ ໃຫ້ກັບທາງຄາວຕີ້ (ຄຳຖາມທີ 1 ຢູ່ໃນໜ້າທີ 1 ຂອງໃບສະໝັກ) ເພື່ອເລີ່ມຂັ້ນຕອນການສະໝັກຂໍ CalFresh. ສຳລັບການຊ່ວຍເຫຼືອເງິນສົດ ທ່ານຕ້ອງຕອບຄຳຖາມທີ 1 ຫາທີ 5 ຢູ່ໃນໜ້າທີ 1 ແລະ 2 ຂອງໃບສະໝັກ ແລະລົງລາຍເຊັນໃສ່ ເພື່ອເລີ່ມຂັ້ນຕອນການສະໝັກ. ສຳລັບໂຄງການຊ່ວຍເຫຼືອທົ່ວໄປ ຫຼື ໂຄງການບັນເທົາທຸກທົ່ວໄປ ຂໍໃຫ້ຖາມທາງຄາວຕີ້ວ່າ ຄຳຖາມໃດທີ່ຕ້ອງຕອບເພື່ອເລີ່ມຂັ້ນຕອນການສະໝັກ.
- ແຕ່ລະໂຄງການມີສັນຍາລັກ (ສະແດງໄວ້ຢູ່ດ້ານເທິງຂອງໜ້ານີ້) ສະແດງບອກວ່າຄຳຖາມໃດກ່ຽວກັບໂຄງການໃດ. ສຳລັບການຊ່ວຍເຫຼືອເງິນສົດ, ມັນແມ່ນສັນຍາລັກເງິນໂດລາ; ສຳລັບ CalFresh, ມັນແມ່ນລໍ້ຊ໊ອບປິ້ງ; ແລະສຳລັບການຄຸ້ມຄອງສຸຂະພາບ, ມັນແມ່ນລົດໂຮງໝໍ. ຕົວຢ່າງ, ຖ້າທ່ານບໍ່ໄດ້ກຳລັງສະໝັກຂໍການຊ່ວຍເຫຼືອເງິນສົດ, ທ່ານບໍ່ຈຳເປັນຕ້ອງຕອບຄຳຖາມທີ່ໝາຍດ້ວຍສັນຍາລັກເງິນໂດລາເທົ່ານັ້ນ.
- ເອົາໃບສະໝັກໃຫ້ກັບຄາວຕີ້ດ້ວຍຕົນເອງ, ສົ່ງທາງໄປສະນີ, ໂດຍແຟັກ ຫຼືອອນໄລນ໌.
- ວັນທີຄາວຕີ້ໄດ້ຮັບໃບສະໝັກທີ່ມີລາຍເຊັນຂອງທ່ານແມ່ນວັນທີ່ເລີ່ມໃຫ້ຄຳຕອບວ່າທ່ານສາມາດໄດ້ຮັບເງິນຊ່ວຍເຫຼືອບໍ່. ຖ້າທ່ານຢູ່ໃນສະຖາບັນ, ວັນທີເລີ່ມໃຫ້ຄຳຕອບແມ່ນນັບຈາກວັນທີ່ທ່ານອອກໄປ.

## ຂ້ອຍຈະເຮັດແນວໃດຕໍ່ໄປ?

- ອ່ານກ່ຽວກັບສິດຂອງທ່ານ ແລະຄວາມຮັບຜິດຊອບຂອງທ່ານ (ໜ້າກົດລະບຽບໂຄງການ) ກ່ອນທ່ານຈະເຊັນໃບສະໝັກ.
- ທ່ານຕ້ອງມີການສຳພາດກັບຄາວຕີ້ ເພື່ອປຶກສາເລື່ອງການສະໝັກຂອງທ່ານ. ຖ້າທ່ານມີຄວາມພິການ, ສາມາດຈັດແຈງເລື່ອງອື່ນໆໃຫ້ໄດ້.
- ຖ້າທ່ານບໍ່ໄດ້ປະກອບໃບສະໝັກທັງໝົດເທື່ອ, ທ່ານສາມາດປະກອບມັນໃຫ້ສຳເລັດໄດ້ໃນລະຫວ່າງການສຳພາດ.
- ທ່ານຈະຕ້ອງໃຫ້ຫຼັກຖານລາຍຮັບ, ລາຍຈ່າຍ, ແລະສະພາບການອື່ນໆຂອງທ່ານ ເພື່ອເບິ່ງວ່າທ່ານມີສິດໄດ້ຮັບບໍ່.

## ມັນຈະໃຊ້ເວລາດົນປານໃດ?

ມັນອາດຈະໃຊ້ເວລາເຖິງ 30 ວັນ ເພື່ອດຳເນີນການສະໝັກຂອງທ່ານໃຫ້ສຳເລັດສຳລັບ CalFresh. ສຳລັບການຊ່ວຍເຫຼືອເງິນສົດ ແລະ Medi-Cal, ມັນອາດຈະໃຊ້ເວລາເຖິງ 45 ວັນ. ໃຫ້ຖາມກັບຄາວຕີ້ກ່ຽວກັບວິທີເອົາເງິນຊ່ວຍເຫຼືອ ຫຼືການດູແລສຸຂະພາບຂອງທ່ານທັນທີ ຖ້າທ່ານມີກໍລະນີສຸກເສີນ.

ທ່ານອາດຈະສາມາດເອົາເງິນຊ່ວຍເຫຼືອ CalFresh ໄດ້ພາຍໃນ 3 ວັນຕາມປະຕິທິນ ຖ້າ:

- ລາຍໄດ້ທັງໝົດຕໍ່ເດືອນຂອງຄອບຄົວຂອງທ່ານ (ລາຍຮັບກ່ອນການຫັກຕ່າງໆ) ໜ້ອຍກວ່າ $150 ແລະເງິນສົດໃນມື ຫຼືບັນຊີປະຈຳວັນ ຫຼືບັນຊີຝາກປະຢັດມີບໍ່ເກີນ $100; ຫຼື
- ຄ່າໃຊ້ຈ່າຍທີ່ພັກອາໄສຂອງຄອບຄົວຂອງທ່ານ (ຄ່າເຊົ່າ/ຄ່າຜ່ອນບ້ານ ແລະສິ່ງອຳນວຍຄວາມສະດວກຕ່າງໆ) ຫຼາຍກວ່າລາຍໄດ້ລວມປະຈຳເດືອນຂອງທ່ານ ແລະເງິນຢູ່ໃນບັນຊີປະຈຳວັນ ຫຼືປະຢັດຂອງທ່ານ; ຫຼື
- ທ່ານເປັນຜູ້ຍົກຍ້າຍຖິ່ນຖານ ຫຼືເປັນຄອບຄົວຊາວກະສິກອນເຮັດວຽກຕາມລະດູການທີ່ມີເງິນໜ້ອຍກວ່າ $100 ຢູ່ໃນບັນຊີປະຈຳວັນ ຫຼືປະຢັດ ແລະ 1) ລາຍໄດ້ຂອງທ່ານຖືກຢຸດ, ຫຼື 2) ລາຍໄດ້ຂອງທ່ານເລີ່ມຕົ້ນ ແຕ່ທ່ານບໍ່ຄາດວ່າຈະໄດ້ຮັບຫຼາຍກວ່າ $25 ຢູ່ໃນ 10 ວັນຂ້າງໜ້າ.

ສຳລັບການຊ່ວຍເຫຼືອເງິນສົດ, ທ່ານອາດຈະໄດ້ຮັບການຊ່ວຍເຫຼືອທັນທີ ຖ້າ:

- ທ່ານເປັນຄົນບໍ່ມີບ້ານ ຫຼືໄດ້ຮັບແຈ້ງເລື່ອງການໄລ່ອອກຈາກບ້ານ ຫຼືແຈ້ງການໃຫ້ຈ່າຍຄ່າເຊົ່າ ຫຼືຍ້າຍອອກ; ຫຼື
- ອາຫານຂອງທ່ານຈະໝົດພາຍໃນສາມວັນ; ຫຼື
- ສິ່ງໃຊ້ສອຍອຳນວຍຄວາມສະດວກຂອງທ່ານຖືກ ຫຼືຈະຖືກຕັດ; ຫຼື
- ທ່ານບໍ່ມີເຄື່ອງນຸ່ງຫົ່ມ ຫຼືຜ້າອ້ອມພຽງພໍ; ຫຼື
- ທ່ານມີຄວາມສຸກເສີນປະເພດອື່ນທີ່ສຳຄັນຕໍ່ສຸຂະພາບ ແລະຄວາມປອດໄພ.

**ໜ້າໃຫ້ຂໍ້ມູນ - ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້.**

ເພື່ອຊ່ວຍໃຫ້ຄາວຕີ້ເຫັນວ່າ ທ່ານສາມາດຈະໄດ້ຮັບເງິນຊ່ວຍເຫຼືອໄວຂຶ້ນບໍ່ນັ້ນ, ກະລຸນາຕອບຄຳຖາມທີ 1, 6 ຫາ 9, 15, ແລະ 24, ແລະເອົາຫຼັກຖານຂໍ້ມູນປະຈຳຕົວຂອງທ່ານໃຫ້ກັບຄາວຕີ້ (ຖ້າທ່ານມີ) ພ້ອມກັບໃບສະໝັກ. ສຳລັບໂຄງການຊ່ວຍເຫຼືອທົ່ວໄປ ຫຼື ໂຄງການບັນເທົາທຸກທົ່ວໄປ ໃຫ້ຖາມຄາວຕີ້ວ່າ ມັນຈະໃຊ້ເວລາດົນປານໃດ ແລະມີກົດລະບຽບພິເສດຫຍັງບໍ່ສຳລັບການຮັບເອົາການຊ່ວຍເຫຼືອໄວຂຶ້ນ.

ຄາວຕີ້ຈະສົ່ງໜັງສືໃຫ້ກັບທ່ານ ເພື່ອໃຫ້ທ່ານຮູ້ວ່າຄອບຄົວຂອງທ່ານໄດ້ຮັບການອະນຸມັດ ຫຼືຖືກປະຕິເສດສຳລັບເງິນຊ່ວຍເຫຼືອທີ່ທ່ານສະໝັກຂໍນັ້ນ.

**ຂ້ອຍຈຳເປັນຕ້ອງມີອັນໃດແດ່ສຳລັບການສຳພາດຂອງຂ້ອຍ?**
ເພື່ອຫຼີກເວັ້ນຄວາມຊັກຊ້າ, ໃຫ້ນຳເອົາຫຼັກຖານຂອງລາຍການຕໍ່ໄປນີ້ໄປພ້ອມກັບທ່ານເມື່ອໄປທຳການສຳພາດ. ຈົ່ງໄປສຳພາດ ແມ້ວ່າທ່ານບໍ່ມີຫຼັກຖານກໍ່ຕາມ. ຄາວຕີ້ອາດຈະສາມາດຊ່ວຍໄດ້ ຖ້າທ່ານຕ້ອງການຈະເອົາຫຼັກຖານ. ໃນລະຫວ່າງການສຳພາດ, ຄາວຕີ້ຈະກວດເບິ່ງຂໍ້ມູນຢູ່ໃນໃບສະໝັກ ແລະຈະຖາມຄຳຖາມກັບທ່ານ ເພື່ອເບິ່ງວ່າທ່ານສາມາດທີ່ຈະໄດ້ເງິນຊ່ວຍເຫຼືອບໍ່ ແລະຈຳນວນເງິນຊ່ວຍເຫຼືອ ທີ່ທ່ານສາມາດໄດ້ຮັບ.

**ຫຼັກຖານທີ່ຈຳເປັນເພື່ອໃຫ້ໄດ້ເງິນຊ່ວຍເຫຼືອ**

- ຫຼັກຖານປະຈຳຕົວ (ໃບຂັບຂີ່, ບັດ ID ຂອງລັດ, ໜັງສືເດີນທາງ).
- ໃບຢັ້ງຢືນການເກີດສຳລັບທຸກຄົນທີ່ສະໝັກຂໍການຊ່ວຍເຫຼືອເງິນສົດ.
- ຫຼັກຖານບ່ອນຢູ່ຂອງທ່ານ (ສັນຍາເຊົ່າ, ໃບບິນປະຈຸບັນທີ່ມີທີ່ຢູ່ຂອງທ່ານລົງລາຍການໄວ້).
- ເລກປະກັນສັງຄົມສຳລັບທຸກຄົນທີ່ສະໝັກຂໍການຊ່ວຍເຫຼືອ (ເບິ່ງບັນທຶກລຸ່ມນີ້ກ່ຽວກັບຜູ້ທີ່ບໍ່ແມ່ນພົນລະເມືອງ).
- ເງິນຢູ່ໃນທະນາຄານສຳລັບທຸກຄົນຢູ່ໃນຄອບຄົວຂອງທ່ານ (ລາຍງານບັນຊີສຳຮອງຫຼ້າສຸດ).
- ລາຍໄດ້ຂອງທຸກຄົນຢູ່ໃນຄອບຄົວທີ່ຫາມາໄດ້ໃນ 30 ວັນຜ່ານມາ (ສົ້ນໃບຮັບເງິນຫຼ້າສຸດ, ໃບລາຍງານວຽກຈາກນາຍຈ້າງ). **ໝາຍເຫດ:** ຖ້າເຮັດທຸລະກິດຕົນເອງ, ໃຫ້ເອົາບັນທຶກລາຍໄດ້ ແລະລາຍຈ່າຍ ຫຼືພາສີ.
- ລາຍໄດ້ທີ່ບໍ່ມາຈາກການຫາເອງ (ເງິນຊ່ວຍເຫຼືອຫວ່າງງານ, SSI, ປະກັນສັງຄົມ, ເງິນຊ່ວຍເຫຼືອນັກຮົບເກົ່າ, ເງິນຊ່ວຍເຫຼືອລູກ, ການຊົດເຊີຍຂອງຜູ້ເຮັດວຽກ, ເງິນຊ່ວຍເຫຼືອລ້າໃນໂຮງຮຽນ ຫຼືກູ້ຢືມ, ລາຍໄດ້ຈາກການເຊົ່າ, ອື່ນໆ).
- ສະຖານະການເຂົ້າເມືອງທີ່ຖືກຕ້ອງຕາມກົດໝາຍ **ເທົ່ານັ້ນ** ສຳລັບຜູ້ທີ່ບໍ່ພົນລະເມືອງທີ່ສະໝັກຂໍເງິນຊ່ວຍເຫຼືອ (ບັດທະບຽນຕ່າງດ້າວ, ວີຊ່າ).
  **ໝາຍເຫດ:**
  ຜູ້ທີ່ບໍ່ແມ່ນພົນລະເມືອງທີ່ກຳລັງສະໝັກຂໍສະຖານະການເຂົ້າເມືອງອີງຕາມຄວາມຮຸນແຮງໃນຄອບຄົວ, ການດຳເນີນຄະດີອາຍາ ຫຼືການຄ້າມະນຸດອາດຈະບໍ່ຈຳເປັນຕ້ອງມີຫຼັກຖານນີ້. ຍັງອາດຈະບໍ່ຕ້ອງເອົາໝາຍເລກປະກັນສັງຄົມນຳເຂົາເຈົ້າອີກ.

**ຫຼັກຖານທີ່ຈຳເປັນເພື່ອໃຫ້ໄດ້ເງິນຊ່ວຍເຫຼືອ CalFresh <u>ເພີ່ມຂຶ້ນ</u>**

- ຄ່າໃຊ້ຈ່າຍທີ່ຢູ່ອາໄສ (ໃບຮັບເງິນຄ່າເຊົ່າ, ໃບບິນຄ່າຜ່ອນບ້ານ, ໃບບິນພາສີຊັບສິນ, ເອກະສານປະກັນໄພ).
- ຄ່າໂທລະສັບ ແລະສິ່ງອຳນວຍຄວາມສະດວກຕ່າງໆ.
- ຄ່າປິ່ນປົວທາງການແພດສຳລັບຜູ້ໃດຜູ້ໜຶ່ງຢູ່ໃນຄອບຄົວຂອງທ່ານທີ່ເປັນຄົນສູງອາຍຸ (60 ປີ ແລະແກ່ກວ່າ) ຫຼືພິການ.
- ຄ່າໃຊ້ຈ່າຍດູແລເດັກນ້ອຍ ແລະຜູ້ໃຫຍ່ ເນື່ອງຈາກມີບາງຄົນເຮັດວຽກ, ກຳລັງຊອກວຽກເຮັດ, ເຂົ້າຝຶກອົບຮົມ ຫຼືໂຮງຮຽນ, ຫຼືເຂົ້າຮ່ວມໃນກິດຈະກຳວຽກທີ່ຕ້ອງການ.
- ການຊ່ວຍເຫຼືອເດັກທີ່ຜູ້ໃດຜູ້ໜຶ່ງຢູ່ໃນເຮືອນຂອງທ່ານຈ່າຍ.

**ຫຼັກຖານເພີ່ມເຕີມທີ່ຈຳເປັນສຳລັບການຄຸ້ມຄອງສຸຂະພາບ**

- ຂໍ້ມູນກ່ຽວກັບການປະກັນໄພສຸຂະພາບທີ່ກ່ຽວຂ້ອງກັບວຽກໃດໜຶ່ງທີ່ມີຢູ່ໃຫ້ກັບຄອບຄົວຂອງທ່ານ.
- ເລກທີສັນຍາປະກັນໄພສຳລັບການປະກັນໄພສຸຂະພາບປະຈຸບັນໃດໜຶ່ງ.

**ຫຼັກຖານເພີ່ມເຕີມທີ່ຈຳເປັນສຳລັບການຊ່ວຍເຫຼືອເງິນສົດ (Cash Aid)**

- ຫຼັກຖານການສັກຢາກັນພະຍາດສຳລັບເດັກນ້ອຍອາຍຸຫົກປີ ຫຼືນ້ອຍກວ່າ.
- ທະບຽນລົດສຳລັບພາຫະນະທີ່ທ່ານເປັນເຈົ້າຂອງ ຫຼືບາງຄົນເປັນເຈົ້າຂອງທີ່ທ່ານກຳລັງສະໝັກຂໍ.

**ຈະເຮັດແນວໃດ ຖ້າຂ້ອຍເປັນຄົນບໍ່ມີບ້ານ?**
ຈົ່ງແຈ້ງໃຫ້ທາງຄາວຕີ້ຮູ້ທັນທີ ຖ້າທ່ານເປັນຄົນບໍ່ມີບ້ານ ເພື່ອວ່າເຂົາເຈົ້າຈະສາມາດຊ່ວຍທ່ານເບິ່ງທີ່ຢູ່ທີ່ຈະໃຊ້ເພື່ອຍອມຮັບເອົາໃບສະໝັກຂອງທ່ານ ແລະໄດ້ຮັບແຈ້ງການຈາກຄາວຕີ້ກ່ຽວກັບສຳນວນຂອງທ່ານ. ສຳລັບ CalFresh ແລະການຊ່ວຍເຫຼືອເງິນສົດ, ບໍ່ມີບ້ານໝາຍຄວາມວ່າ:

A. ພັກຢູ່ໃນທີ່ພັກທີ່ໄດ້ຈັດໃຫ້, ບ່ອນພັກພິງ, ຫຼືບ່ອນທີ່ຄ້າຍຄືກັນນີ້.
B. ພັກຢູ່ບ້ານຂອງຄົນອື່ນ ຫຼືຄອບຄົວອື່ນເປັນເວລາບໍ່ເກີນ 90 ວັນຕໍ່ກັນ.
C. ນອນຢູ່ໃນສະຖານທີ່ບໍ່ໄດ້ອອກແບບໃຫ້, ຫຼືປົກກະຕິໃຊ້ເປັນບ່ອນຫຼັບນອນ (ລະບຽງ, ສະຖານີລົດເມ, ຫ້ອງລັອບບີ້, ຫຼືບ່ອນທີ່ຄ້າຍຄືກັນນີ້).

**ໜ້າໃຫ້ຂໍ້ມູນ - ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້.**

# ສິດ ແລະຄວາມຮັບຜິດຊອບຕ່າງໆ

## ທ່ານມີຄວາມຮັບຜິດຊອບທີ່ຈະ:

- ຕ້ອງໃຫ້ຂໍ້ມູນທີ່ຈຳເປັນເພື່ອກຳນົດການມີສິດໄດ້ຮັບຂອງທ່ານແກ່ທາງຄາວຕີ້.
- ຕ້ອງໃຫ້ຫຼັກຖານຂໍ້ມູນທີ່ທ່ານມີແກ່ທາງຄາວຕີ້ ເມື່ອມີຄວາມຕ້ອງການ.
- ລາຍງານການປ່ຽນແປງຕ່າງໆຕາມທີ່ກຳນົດ. ທາງຄາວຕີ້ຈະໃຫ້ຂໍ້ມູນແກ່ທ່ານກ່ຽວກັບວ່າຈະໃຫ້ລາຍງານອັນໃດ, ເມື່ອໃດ, ແລະແນວໃດ. ສຳລັບ CalFresh ແລະການຊ່ວຍເຫຼືອເງິນສົດ ຖ້າທ່ານບໍ່ບັນລຸໄດ້ຕາມເງື່ອນໄຂກຳນົດການລາຍງານຂອງຄອບຄົວຂອງທ່ານ, ສຳນວນຂອງທ່ານ ອາດຈະຖືກປິດ ຫຼືເງິນຊ່ວຍເຫຼືອຂອງທ່ານອາດຈະຫຼຸດລົງ ຫຼືຖືກຢຸດ.
- ຊອກຫາ, ຮັບ, ແລະຮັກສາວຽກໄວ້ ຫຼືເຂົ້າຮ່ວມໃນກິດຈະກຳຕ່າງໆ ຖ້າທາງຄາວຕີ້ບອກທ່ານວ່າ ມັນມີຄວາມຈຳເປັນຢູ່ໃນສຳນວນຂອງທ່ານ.
- ຮ່ວມມືກັບຄາວຕີ້, ລັດ, ຫຼືບຸກຄະລາກອນຂອງລັດຖະບານກາງຢ່າງເຕັມທີ່ ຖ້າສຳນວນຂອງທ່ານຖືກເລືອກຂຶ້ນມາທົບທວນ ຫຼືສືບສວນ ເພື່ອຮັບປະກັນການມີສິດໄດ້ຮັບຂອງທ່ານ ແລະລະດັບເງິນຊ່ວຍເຫຼືອໄດ້ມີການກຳນົດຢ່າງຖືກຕ້ອງ. ການບໍ່ຮ່ວມມືກັບການທົບທວນເຫຼົ່ານີ້ຈະມີຜົນເຮັດໃຫ້ເກີດມີການສູນເສຍຕໍ່ເງິນຊ່ວຍເຫຼືອຂອງທ່ານ.
- ຊຳລະການຊ່ວຍເຫຼືອເງິນສົດ ຫຼືເງິນຊ່ວຍເຫຼືອ CalFresh ໃດໜຶ່ງທີ່ທ່ານບໍ່ມີສິດໄດ້ຮັບນັ້ນກັບຄືນ.

## ທ່ານມີສິດ:

- ຍື່ນໃບສະໝັກຂໍ CalFresh ໂດຍການໃຫ້ແຕ່ຊື່, ທີ່ຢູ່, ແລະລາຍເຊັນຂອງທ່ານເທົ່ານັ້ນໄດ້.
- ມີຜູ້ແປພາສາທີ່ທາງລັດຈັດໃຫ້ໂດຍທີ່ທ່ານບໍ່ຕ້ອງເສຍຄ່າໃຊ້ຈ່າຍ ຖ້າທ່ານຕ້ອງການຜູ້ແປໃຫ້.
- ໃຫ້ເກັບຮັກສາຂໍ້ມູນທີ່ທ່ານເອົາໃຫ້ກັບທາງຄາວຕີ້ໄວ້ເປັນຄວາມລັບໄດ້, ນອກຈາກວ່າມີຄວາມກ່ຽວຂ້ອງກັບການບໍລິຫານໂຄງການຂອງຄາວຕີ້ໂດຍກົງ.
- ຖອນໃບສະໝັກຂອງທ່ານໄດ້ທຸກເວລາ ກ່ອນທີ່ທາງຄາວຕີ້ຈະກຳນົດການມີສິດໄດ້ຮັບ.
- ຂໍຄວາມຊ່ວຍເຫຼືອ ເພື່ອປະກອບແບບຟອມຂອງທ່ານ ຫຼືຊ່ວຍໃນການເອົາຫຼັກຖານທີ່ທ່ານຕ້ອງການ ແລະໄດ້ຮັບຄຳອະທິບາຍກ່ຽວກັບກົດລະບຽບຕ່າງໆ.
- ໄດ້ຮັບການດູແລເອົາໃຈໃສ່ດ້ວຍຄວາມເຄົາລົບ, ນັບຖື, ແລະເຫັນຄວາມສຳຄັນ, ແລະບໍ່ຖືກຈຳແນກຄວາມແຕກຕ່າງ.
- ໄດ້ຮັບເງິນຊ່ວຍເຫຼືອ CalFresh ພາຍໃນ 3 ວັນ ຖ້າທ່ານມີເງື່ອນໄຂໄດ້ຮັບການບໍລິການດ່ວນ.
- ໄດ້ຮັບການຊ່ວຍເຫຼືອເງິນສົດພາຍໃນນຶ່ງວັນ ຖ້າທ່ານມີເງື່ອນໄຂໄດ້ຮັບຄວາມຈຳເປັນທັນທີ.
- ໄດ້ຮັບການສຳພາດດ້ວຍການໃຫ້ເວລາທີ່ເໝາະສົມໂດຍທາງຄາວຕີ້ ເມື່ອທ່ານສະໝັກ ຫຼືເມື່ອມີການກຳນົດການມີສິດໄດ້ຮັບຂອງທ່ານພາຍໃນ 30 ວັນ ສຳລັບ CalFresh ຫຼື 45 ວັນ ສຳລັບການຊ່ວຍເຫຼືອເງິນສົດ ແລະ Medi-Cal.
- ໄດ້ຮັບເວລາຢ່າງໜ້ອຍ 10 ວັນ ເພື່ອໃຫ້ຫຼັກຖານທີ່ຈຳເປັນແກ່ທາງຄາວຕີ້ ເພື່ອດຳເນີນການກຳນົດການມີສິດໄດ້ຮັບ.
- ໄດ້ຮັບແຈ້ງການເປັນລາຍລັກອັກສອນຢ່າງໜ້ອຍ 10 ວັນ ກ່ອນທີ່ຄາວຕີ້ຈະຫຼຸດ ຫຼືຢຸດ CalFresh ຫຼືການຊ່ວຍເຫຼືອເງິນສົດຂອງທ່ານລົງ.
- ປຶກສາສຳນວນຂອງທ່ານກັບຄາວຕີ້ ແລະທົບທວນສຳນວນຂອງທ່ານຄືນ ເມື່ອທ່ານຂໍໃຫ້ດຳເນີນການເຊັ່ນນັ້ນ.
- ຂໍໃຫ້ມີການພິຈາລະນາຄະດີຂອງລັດພາຍໃນ 90 ວັນ ຖ້າທ່ານບໍ່ເຫັນດີກັບຄາວຕີ້ກ່ຽວກັບສຳນວນຂອງທ່ານ.
  ຖ້າທ່ານຂໍໃຫ້ມີການພິຈາລະນາຄະດີກ່ອນຈະມີການດຳເນີນການໃນສຳນວນຂອງທ່ານ, ເງິນຊ່ວຍເຫຼືອຂອງທ່ານຈະຍັງຄົງຢູ່ເໝືອນເດີມໄປຈົນກວ່າຮອດການພິຈາລະນາຄະດີ ຫຼືໝົດໄລຍະການຍັ້ງຢືນຂອງທ່ານ, ເອົາອັນທີ່ມາຮອດກ່ອນ.
  ທ່ານສາມາດບອກໃຫ້ທາງຄາວຕີ້ປ່ອຍໃຫ້ມີການປ່ຽນແປງເງິນຊ່ວຍເຫຼືອຂອງທ່ານໄປຈົນຮອດຫຼັງຈາກການພິຈາລະນາຄະດີ ເພື່ອຫຼີກເວັ້ນການຈ່າຍເງິນຊ່ວຍເຫຼືອໃດໜຶ່ງທີ່ຈ່າຍໄປໃຫ້ເກີນນັ້ນຄືນ. ຖ້າກົດລະບຽບຜູ້ພິພາກສາກົດໝາຍປົກຄອງເອື້ອປະໂຫຍດໃຫ້ກັບທ່ານ, ຄາວຕີ້ຈະໃຫ້ຜົນປະໂຫຍດໃດໜຶ່ງທີ່ຖືກຕັດໄປນັ້ນຄືນໃຫ້ທ່ານ.
- ຖາມກ່ຽວກັບສິດການພິຈາລະນາຄະດີຂອງທ່ານ ຫຼືສຳລັບການແນະນຳຕໍ່ການຊ່ວຍເຫຼືອກົດໝາຍໄດ້ທີ່ເບີໂທລະສັບເກັບຟຣີທີ່ – **1-800-952-5253** ຫຼືສຳລັບການພິຈາລະນາຄະດີ ຫຼືເປັນໃບ້ ຜູ້ທີ່ໃຊ້ການໂທ TDD, **1-800-952-8349.** ທ່ານອາດຈະໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍຟຣີຢູ່ຫ້ອງການຊ່ວຍເຫຼືອກົດໝາຍ ຫຼືສິດທິຕໍ່ສະຫວັດດີການໃນທ້ອງຖິ່ນຂອງທ່ານ.
- ເອົາໝູ່ ຫຼືຜູ້ໃດຜູ້ໜຶ່ງມາກັບທ່ານໃນການພິຈາລະນາຄະດີ ຖ້າທ່ານບໍ່ຕ້ອງການມາຄົນດຽວ.
- ຂໍຄວາມຊ່ວຍເຫຼືອຈາກຄາວຕີ້ເພື່ອລົງທະບຽນລົງຄະແນນສຽງ.
- ລາຍງານການປ່ຽນແປງທີ່ທ່ານບໍ່ໄດ້ຮຽກຮ້ອງໃຫ້ລາຍງານ, ຖ້າມັນອາດຈະເພີ່ມເງິນຊ່ວຍເຫຼືອ CalFresh ຫຼືການຊ່ວຍເຫຼືອເງິນສົດຂອງທ່ານ.
- ໃຫ້ຫຼັກຖານຄ່າໃຊ້ຈ່າຍຂອງຄອບຄົວທີ່ອາດຈະຊ່ວຍໃຫ້ໄດ້ຮັບເງິນຊ່ວຍເຫຼືອ CalFresh ເພີ່ມຂຶ້ນ. ການບໍ່ໃຫ້ຫຼັກຖານແກ່ຄາວຕີ້ກໍ່ຄືກັບທີ່ເວົ້າວ່າ ທ່ານບໍ່ມີຄ່າໃຊ້ຈ່າຍນັ້ນ ແລະທ່ານຈະບໍ່ສາມາດໄດ້ຮັບເງິນຊ່ວຍເຫຼືອ CalFresh ເພີ່ມຂຶ້ນ.
- ຈົ່ງໃຫ້ຄາວຕີ້ຮູ້ຈັກ ຖ້າທ່ານຢາກຈະໃຫ້ຜູ້ອື່ນໃຊ້ເງິນຊ່ວຍເຫຼືອ CalFresh ຂອງທ່ານສຳລັບຄອບຄົວຂອງທ່ານ ຫຼືຊ່ວຍເລື່ອງສຳນວນ CalFresh ຂອງທ່ານ (ຜູ້ຕາງໜ້າທີ່ໄດ້ຮັບສິດ).

  ທ່ານຍັງໃຫ້ສິດກັບອົງການ Medi-Cal ເພື່ອຕິດຕາມ ແລະເອົາການສະໜັບສະໜູນທາງດ້ານການແພດຈາກຜົວ/ເມຍ ຫຼືພໍ່ແມ່. ຖ້າທ່ານຄິດວ່າ ການຮ່ວມມືເພື່ອເອົາການສະໜັບສະໜູນທາງການແພດຈະເປັນອັນຕະລາຍຕໍ່ທ່ານ ຫຼືລູກຂອງທ່ານ, ທ່ານສາມາດບອກອົງການ Medi-Cal ແລະທ່ານອາດຈະບໍ່ຮ່ວມມືກໍ່ໄດ້.

## ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້

## ກົດລະບຽບຂອງໂຄງການ ແລະການລົງໂທດ

ທ່ານກຳລັງກະທຳຄວາມຜິດ ຖ້າທ່ານໃຫ້ຂໍ້ມູນຜິດ ຫຼືເທັດ, ຫຼືບໍ່ໃຫ້ຂໍ້ມູນທັງໝົດເພື່ອຈຸດປະສົງໃຫ້ໄດ້ CalFresh, ການຊ່ວຍເຫຼືອເງິນສົດ, ແລະ Medi-Cal, ດັ່ງນັ້ນ ທ່ານຈະບໍ່ມີສິດໄດ້ຮັບ, ຫຼືເພື່ອຊ່ວຍໃຫ້ຜູ້ອື່ນບາງຄົນໄດ້ຮັບເງິນຊ່ວຍເຫຼືອ ທີ່ເຂົາເຈົ້າບໍ່ມີສິດຈະໄດ້ຮັບ. ທ່ານຈະຕ້ອງຊຳລະເງິນຊ່ວຍເຫຼືອໃດໜຶ່ງທີ່ທ່ານບໍ່ມີສິດໄດ້ຮັບນັ້ນກັບຄືນ. ຖ້າທ່ານເຮັດແນວນີ້ເພື່ອຈຸດປະສົງ ແລະໄດ້ຮັບເງິນຊ່ວຍເຫຼືອຫຼາຍກວ່າ $950 ທີ່ທ່ານບໍ່ມີສິດໄດ້ຮັບ, ທ່ານສາມາດຖືກກ່າວຫາວ່າເປັນຜູ້ກະທຳຜິດໄດ້.

| | |
|---|---|
| **ສຳລັບ CalFresh: ຂ້ອຍເຂົ້າໃຈວ່າ**<br>**ຖ້າຂ້ອຍກະທຳການລະເມີດໂຄງການໂດຍເຈດຕະນາໂດຍການເຮັດສິ່ງໃດໜຶ່ງຕໍ່ໄປນີ້ຄື:** | **ຂ້ອຍອາດຈະ...** |
| • ເຊື່ອງຂໍ້ມູນ ຫຼືເຮັດການລາຍງານບິດເບືອນ<br>• ໃຊ້ບັດໂອນເງິນຊ່ວຍເຫຼືອອີເລັກໂຕຼນິກ (EBT) ທີ່ເປັນຂອງຜູ້ອື່ນ ຫຼືປ່ອຍໃຫ້ຜູ້ອື່ນໃຊ້ບັດຂອງຂ້ອຍ<br>• ໃຊ້ເງິນຊ່ວຍເຫຼືອ CalFresh ໄປຊື້ເຫຼົ້າ ຫຼືຢາສູບ<br>• ຄ້າ, ຂາຍ, ຫຼືເອົາໃຫ້ຜູ້ອື່ນສຳລັບເງິນຊ່ວຍເຫຼືອ CalFresh ຫຼືບັດ EBT | • ເສຍເງິນຊ່ວຍເຫຼືອ CalFresh ເປັນເວລາ 12 ເດືອນຕໍ່ກັບການກະທຳຜິດຄັ້ງທຳອິດ ແລະຈຳເປັນຕ້ອງໄດ້ຈ່າຍເງິນຊ່ວຍເຫຼືອ CalFresh ທີ່ຈ່າຍເກີນໃຫ້ກັບຂ້ອຍນັ້ນຄືນທັງໝົດ<br>• ເສຍເງິນຊ່ວຍເຫຼືອ CalFresh ເປັນເວລາ 24 ເດືອນຕໍ່ກັບການກະທຳຜິດຄັ້ງທີສອງ ແລະຈຳເປັນຕ້ອງໄດ້ຈ່າຍເງິນຊ່ວຍເຫຼືອ CalFresh ທີ່ຈ່າຍເກີນໃຫ້ກັບຂ້ອຍນັ້ນຄືນທັງໝົດ<br>• ເສຍເງິນຊ່ວຍເຫຼືອ CalFresh ຖາວອນຕໍ່ກັບການກະທຳຜິດຄັ້ງທີສາມ ແລະຈຳເປັນຕ້ອງໄດ້ຈ່າຍເງິນຊ່ວຍເຫຼືອ CalFresh ທີ່ຈ່າຍເກີນໃຫ້ກັບຂ້ອຍນັ້ນຄືນທັງໝົດ<br>• ຖືກປັບໄໝເຖິງ $250,000, ຈຳຄຸກເຖິງ 20 ປີ, ຫຼືທັງຈຳທັງປັບ |
| • ຄ້າເງິນຊ່ວຍເຫຼືອ CalFresh ເພື່ອສານຄວບຄຸມ, ເຊັ່ນຢາເສບຕິດ | • ເສຍເງິນຊ່ວຍເຫຼືອ CalFresh ເປັນເວລາ 24 ເດືອນສຳລັບການກະທຳຜິດຄັ້ງທຳອິດ<br>• ເສຍເງິນຊ່ວຍເຫຼືອ CalFresh ຖາວອນສຳລັບການກະທຳຜິດຄັ້ງທີສອງ. |
| • ໃຫ້ຂໍ້ມູນບິດເບືອນກ່ຽວກັບວ່າຂ້ອຍແມ່ນໃຜ ແລະຂ້ອຍອາໄສຢູ່ໃສ ເພື່ອໃຫ້ສາມາໄດ້ຮັບເງິນຊ່ວຍເຫຼືອ CalFresh ພິເສດ | • ເສຍເງິນຊ່ວຍເຫຼືອ CalFresh ເປັນເວລາ 10 ປີສຳລັບການກະທຳຜິດແຕ່ລະຄັ້ງ |
| • ຖືກຕັດສິນວ່າມີຄວາມຜິດໃນການຄ້າ ຫຼືຂາຍເງິນຊ່ວຍເຫຼືອ CalFresh ທີ່ມີມູນຄ່າຫຼາຍກວ່າ $500, ຫຼືການຄ້າເງິນຊ່ວຍເຫຼືອ CalFresh ສຳລັບອາວຸດ, ລູກລະເບີດ, ຫຼືວັດຖຸລະເບີດ | • ເສຍເງິນຊ່ວຍເຫຼືອ CalFresh ຕະຫຼອດຊີບ |
| **ສຳລັບການຊ່ວຍເຫຼືອເງິນສົດ ຂ້ອຍເຂົ້າໃຈວ່າ ຖ້າຂ້ອຍ...**<br>• ຖືກຕັດສິນວ່າມີການລະເມີດໂຄງການໂດຍເຈດຕະນາ<br>• ບໍ່ປະຕິບັດຕາມກົດລະບຽບການຊ່ວຍເຫຼືອເງິນສົດ<br>• ຖືກສານພົບວ່າມີຄວາມຜິດຕາມກົດໝາຍ ຫຼືຕາມການພິຈາລະນາຄະດີປົກຄອງຂອງການກະທຳຜິດປະເພດການສໍ້ໂກງ | **ຂ້ອຍອາດຈະ...**<br>• ເສຍການຊ່ວຍເຫຼືອເງິນສົດ<br>• ຖືກປັບໄໝເຖິງ $10,000 ແລະ/ຫຼືຖືກສົ່ງໄປເຂົ້າຄຸກ/ຈຳຄຸກເປັນເວລາ 5 ປີ<br>• ເສຍການຊ່ວຍເຫຼືອເງິນສົດເປັນເວລາ 6 ເດືອນ, 12 ເດືອນ, 2 ປີ, 4 ປີ, 5 ປີ, ຫຼືຕະຫຼອດຊີບ. |

## ຂໍ້ມູນສຳຄັນສຳລັບຜູ້ທີ່ບໍ່ແມ່ນພົນລະເມືອງ

- ທ່ານສາມາດສະໝັກຂໍ ແລະໄດ້ຮັບເງິນຊ່ວຍເຫຼືອ CalFresh ຫຼືການຊ່ວຍເຫຼືອເງິນສົດສຳລັບ, ຫຼື ການດູແລສຸຂະພາບຄົນຜູ້ທີ່ມີສິດໄດ້ຮັບ, ແມ້ແຕ່ຄອບຄົວຂອງທ່ານມີຜູ້ອື່ນທີ່ບໍ່ມີສິດໄດ້ຮັບຢູ່ກໍ່ຕາມ. ຕົວຢ່າງ, ພໍ່ແມ່ທີ່ເປັນຄົນເຂົ້າເມືອງອາດຈະສະໝັກຂໍເງິນຊ່ວຍເຫຼືອ CalFresh ການຊ່ວຍເຫຼືອເງິນສົດ, ຫຼື ການດູແລສຸຂະພາບໃຫ້ກັບລູກຂອງເຂົາເຈົ້າ ທີ່ເປັນພົນລະເມືອງສະຫະລັດ ຫຼືຜູ້ເຂົ້າເມືອງທີ່ມີເງື່ອນໄຂຄົບຖ້ວນ, ເຖິງແມ້ວ່າຜູ້ເປັນພໍ່ແມ່ອາດຈະບໍ່ມີສິດໄດ້ຮັບກໍ່ຕາມ.
- ການໄດ້ຮັບເງິນຊ່ວຍເຫຼືອອາຫານຈະບໍ່ມີຜົນກະທົບຕໍ່ກັບທ່ານ ຫຼືສະຖານະການເຂົ້າເມືອງຂອງທ່ານ. ຂໍ້ມູນການເຂົ້າເມືອງແມ່ນເປັນເລື່ອງສ່ວນຕົວ ແລະເປັນຄວາມລັບ.
- ສະຖານະການເຂົ້າເມືອງຂອງຜູ້ບໍ່ແມ່ນພົນລະເມືອງ ເຊິ່ງເປັນຜູ້ມີສິດໄດ້ຮັບ ແລະສະໝັກຂໍເງິນຊ່ວຍເຫຼືອແມ່ນທາງໜ່ວຍງານພົນລະເມືອງ ແລະການເຂົ້າເມືອງ ຂອງສະຫະລັດ (USCIS) ເປັນຝ່າຍກວດກາ. ກົດໝາຍຂອງລັດຖະບານກາງກ່າວໄວ້ວ່າ USCIS ບໍ່ສາມາດໃຊ້ຂໍ້ມູນເພື່ອຈຸດປະສົງອື່ນ ຍົກເວັ້ນແຕ່ກໍລະນີຂອງການສໍ້ໂກງ.

## ການເລືອກບໍ່ເຂົ້າຮ່ວມ

ທ່ານບໍ່ຕ້ອງໃຫ້ຂໍ້ມູນການເຂົ້າເມືອງ, ເລກປະກັນສັງຄົມ, ຫຼືເອກະສານຕ່າງໆສຳລັບສະມາຊິກຄອບຄົວຜູ້ທີ່ບໍ່ເປັນພົນລະເມືອງ ເຊິ່ງເປັນຜູ້ທີ່ບໍ່ໄດ້ສະໝັກຂໍເງິນຊ່ວຍເຫຼືອ. ທາງຄາວຕີ້ຈຳເປັນຈະຕ້ອງໄດ້ຮູ້ຂໍ້ມູນລາຍຮັບ ແລະສິ່ງຂອງຕ່າງໆຂອງເຂົາເຈົ້າ ເພື່ອກຳນົດເງິນຊ່ວຍເຫຼືອຄອບຄົວຂອງທ່ານໄດ້ຢ່າງຖືກຕ້ອງ. ທາງຄາວຕີ້ຈະບໍ່ຕິດຕໍ່ຫາ USCIS ກ່ຽວກັບຄົນຜູ້ທີ່ບໍ່ສະໝັກຂໍເງິນຊ່ວຍເຫຼືອ.

## ການໃຊ້ເລກປະກັນສັງຄົມ (SSN)

CalFresh ແລະການຊ່ວຍເຫຼືອເງິນສົດ: ທຸກໆຄົນທີ່ສະໝັກຂໍເງິນຊ່ວຍເຫຼືອ CalFresh ຫຼືການຊ່ວຍເຫຼືອເງິນສົດຈຳເປັນຕ້ອງໄດ້ບອກ SSN, ຖ້າທ່ານມີ, ຫຼືຫຼັກຖານທີ່ທ່ານໄດ້ຂໍ SSN (ເຊັ່ນ: ໜັງສືຈາກຫ້ອງການປະກັນສັງຄົມ). ພວກເຮົາສາມາດປະຕິເສດທ່ານ ຫຼືສະມາຊິກຄອບຄົວຂອງທ່ານຜູ້ທີ່ບໍ່ໃຫ້ SSN ແກ່ພວກເຮົາໄດ້. ມີບາງຄົນທີ່ບໍ່ຕ້ອງໃຫ້ SSN ເພື່ອໃຫ້ໄດ້ຮັບຄວາມຊ່ວຍເຫຼືອເຊັ່ນ: ຜູ້ເຄາະຮ້າຍຈາກການຖືກຂົ່ມເຫັງໃນຄອບຄົວ, ພະຍານໃນການຮ້ອງຟ້ອງຄະດີ, ແລະຜູ້ເຄາະຮ້າຍຂອງການຄ້າມະນຸດ.
ການຄຸ້ມຄອງສຸຂະພາບ (Health Coverage)/Medi-Cal: ພວກເຮົາຈຳເປັນຕ້ອງມີ SSN ຂອງທ່ານ ຖ້າທ່ານຕ້ອງການໃຫ້ມີການຄຸ້ມຄອງສຸຂະພາບ ແລະໃຫ້ມີ SSN. ການໃຫ້ SSN ຂອງທ່ານກໍ່ສາມາດມີປະໂຫຍດໄດ້ ຖ້າທ່ານບໍ່ຕ້ອງການໃຫ້ມີການຄຸ້ມຄອງສຸຂະພາບຄືກັນ ເນື່ອງຈາກວ່າ ມັນສາມາດເລັ່ງຂະບວນການສະໝັກໄດ້. ພວກເຮົາໃຊ້ SSN ເພື່ອກວດເບິ່ງລາຍຮັບ ແລະຂໍ້ມູນອື່ນ ເພື່ອເບິ່ງວ່າຜູ້ໃດມີສິດໄດ້ຮັບຄວາມຊ່ວຍເຫຼືອຄ່າໃຊ້ຈ່າຍການຄຸ້ມຄອງສຸຂະພາບ. ຖ້າມີຜູ້ຕ້ອງການຄວາມຊ່ວຍເຫຼືອໃຫ້ໄດ້ SSN, ໂທຫາ 1-800-772-1213 ຫຼືເຂົ້າໄປເບິ່ງເວັບໄຊທ໌: www.socialsecurity.gov

## ການອອກໃຫ້ເກີນທີ່ມີສິດໄດ້ຮັບ

ອັນນີ້ໝາຍຄວາມວ່າ ທ່ານໄດ້ຮັບເງິນຊ່ວຍເຫຼືອ CalFresh ຫຼາຍກວ່າທີ່ທ່ານຄວນຈະໄດ້ຮັບ. ທ່ານຈະຕ້ອງຈ່າຍມັນກັບຄືນ ແມ້ວ່າທາງຄາວຕີ້ໄດ້ເຮັດຜິດ ຫຼືມັນບໍ່ຖືກຈຸດປະສົງກໍ່ຕາມ. ເງິນຊ່ວຍເຫຼືອຂອງທ່ານອາດຈະຖືກຫຼຸດລົງ ຫຼືຖືກຢຸດໄປ. SSN ຂອງທ່ານອາດຈະຖືກນຳໃຊ້ເພື່ອເກັບເອົາຈຳນວນເງິນຊ່ວຍເຫຼືອທີ່ຕິດຄ້າງຜ່ານທາງສານ, ອີງການເກັບຄ່າອື່ນໆ, ຫຼືການດຳເນີນການເກັບຄ່າຂອງລັດຖະບານກາງ.

**ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້**

## ການຈ່າຍໃຫ້ເກີນ

ອັນນີ້ໝາຍຄວາມວ່າ ທ່ານໄດ້ຮັບການຊ່ວຍເຫຼືອເງິນສົດຫຼາຍກວ່າທີ່ທ່ານຄວນຈະໄດ້ຮັບ. ຄືກັນກັບເງິນຊ່ວຍເຫຼືອ CalFresh, ທ່ານຈະຕ້ອງຈ່າຍມັນກັບຄືນ ແມ້ວ່າທາງຄາວຕີ້ໄດ້ເຮັດຜິດ ຫຼືຖ້າມັນບໍ່ຖືກຈຸດປະສົງກໍ່ຕາມ. ການຊ່ວຍເຫຼືອເງິນສົດຂອງທ່ານອາດຈະຖືກຫຼຸດລົງ ຫຼືຖືກຢຸດໄປ. SSN ຂອງທ່ານອາດຈະຖືກນໍາໃຊ້ເພື່ອເກັບເອົາຈໍານວນເງິນຊ່ວຍເຫຼືອທີ່ຕິດຄ້າງຜ່ານທາງສານ, ອົງການເກັບຄ່າອື່ນໆ, ຫຼືການດໍາເນີນການເກັບຄ່າຂອງລັດຖະບານກາງ.

## ການລາຍງານ

ທຸກໆຄອບຄົວທີ່ໄດ້ຮັບເງິນຊ່ວຍເຫຼືອຕ້ອງລາຍງານການປ່ຽນແປງທີ່ແນ່ນອນ. ຄາວຕີ້ຂອງທ່ານຈະບອກໃຫ້ທ່ານຮູ້ວ່າການປ່ຽນແປງອັນໃດແດ່ທີ່ຕ້ອງລາຍງານ, ຈະລາຍງານມັນແນວໃດ, ແລະຈະລາຍງານມັນເມື່ອໃດ. ການບໍ່ລາຍງານເລື່ອງການປ່ຽນແປງໃດໜຶ່ງອາດຈະມີຜົນເຮັດໃຫ້ເງິນຊ່ວຍເຫຼືອຂອງທ່ານຖືກຫຼຸດລົງ ຫຼືຖືກຢຸດໄປ. ທ່ານຍັງສາມາດລາຍງານໄດ້ ຖ້າສິ່ງຕ່າງໆເກີດຂຶ້ນນັ້ນອາດຈະເພີ່ມເງິນຊ່ວຍເຫຼືອຂອງທ່ານເຊັ່ນ: ມີລາຍຮັບໜ້ອຍລົງ.

## ການພິຈາລະນາຄະດີຂອງລັດ

ທ່ານມີສິດຕໍ່ການພິຈາລະນາຄະດີຂອງລັດ ຖ້າທ່ານບໍ່ເຫັນດີກັບການກະທໍາໃດໜຶ່ງທີ່ໄດ້ປະຕິບັດກ່ຽວກັບການສະໝັກຂອງທ່ານ ຫຼືເງິນຊ່ວຍເຫຼືອຂອງທ່ານທີ່ກໍາລັງໄດ້ຮັບຢູ່. ທ່ານສາມາດສະເໜີຂໍການພິຈາລະນາຄະດີຂອງລັດພາຍໃນ 90 ວັນ ຂອງການດໍາເນີນການຂອງຄາວຕີ້ ແລະທ່ານຕ້ອງບອກວ່າເປັນຫຍັງທ່ານຈຶ່ງຕ້ອງການໃຫ້ມີການພິຈາລະນາຄະດີ. ແຈ້ງການເລື່ອງການອະນຸມັດ ຫຼືການປະຕິເສດທີ່ທ່ານໄດ້ຮັບຈາກຄາວຕີ້ຈະມີຂໍ້ມູນກ່ຽວກັບວິທີການສະເໜີຂໍອຸທອນ. ຖ້າທ່ານຮ້ອງຂໍໃຫ້ມີການພິຈາລະນາຄະດີກ່ອນກາ ນດໍາເນີນການເກີດຂຶ້ນ, ທ່ານອາດຈະຮັກສາການຊ່ວຍເຫຼືອເງິນສົດ ແລະເງິນຊ່ວຍເຫຼືອ CalFresh ຂອງທ່ານໄວ້ໄດ້ຈົນກວ່າຈະມີຄໍາຕັດສິນອອກມາ.

## ກົດໝາຍວ່າດ້ວຍຄວາມລັບສ່ວນຕົວ ແລະການເປີດເຜີຍ

ທ່ານກໍາລັງໃຫ້ຂໍ້ມູນສ່ວນຕົວຢູ່ໃນໃບສະໝັກ. ຄາວຕີ້ນໍາໃຊ້ຂໍ້ມູນເພື່ອຈະເບິ່ງວ່າ ທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອບໍ່. ຖ້າທ່ານບໍ່ໃຫ້ຂໍ້ມູນ, ຄາວຕີ້ອາດຈະປະຕິເສດການສະໝັກຂອງທ່ານ. ທ່ານມີສິດຕໍ່ການທົບທວນ, ປ່ຽນແປງ, ຫຼືແກ້ໄຂຂໍ້ມູນໃດໜຶ່ງທີ່ທ່ານໃຫ້ກັບຄາວຕີ້ໄດ້. ຄາວຕີ້ຈະບໍ່ສະແດງຂໍ້ມູນຂອງທ່ານ ຫຼືເອົາມັນໃຫ້ກັບຜູ້ອື່ນ ນອກຈາກວ່າທ່ານໃຫ້ການອະນຸຍາດ ຫຼືກົດໝາຍຂອງລັດຖະບານກາງ ແລະຂອງລັດອະນຸຍາດໃຫ້ປະຕິບັດແນວນັ້ນ. ຄາວຕີ້ຈະກວດສອບຂໍ້ມມູນນີ້ຜ່ານໂປຣແກຼມການຈັບຄູ່ຄອມພິວເຕີ, ລວມທັງລະບົບການກວດສອບລາຍໄດ້ ແລະເງິນທີ່ຫາໄດ້ (IEVS). ຂໍ້ມູນນີ້ຈະຖືກນໍາໄປໃຊ້ເພື່ອຕິດຕາມການປະຕິບັດຕາມການຄວບຄຸມໂຄງການ ແລະການຄຸ້ມຄອງໂຄງການ. ຄາວຕີ້ອາດຈະແລກປ່ຽນຂໍ້ມູນນີ້ກັບອົງການຂອງລັດຖະບານກາງ ແລະຂອງລັດ ເພື່ອການກວດສອບທາງການ, ກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ເພື່ອຈຸດປະສົງຂອງການຈັບກຸມບຸກຄົນທີ່ຫຼົບຫຼີກກົດໝາຍ, ແລະກັບອົງການເກັບກໍາຂໍ້ຮຽກຮ້ອງສ່ວນຕົວ ເພື່ອການດໍາເນີນການເກັບກໍາຂໍ້ຮຽກຮ້ອງນັ້ນ. ຄາວຕີ້ອາດຈະກວດສອບສະຖານະການເຂົ້າເມືອງຂອງສະມາຊິກຄອບຄົວທີ່ສະໝັກຂໍເງິນຊ່ວຍເຫຼືອ ໂດຍການຕິດຕໍ່ທາງ USCIS. ຂໍ້ມູນທີ່ຄາວຕີ້ໄດ້ມາຈາກອົງການເຫຼົ່ານີ້ອາດຈະມີຜົນກະທົບຕໍ່ການມີສິດໄດ້ຮັບ ແລະລະດັບຂອງເງິນຊ່ວຍເຫຼືອຂອງທ່ານ.

ຄາວຕີ້ຈະນໍາໃຊ້ຂໍ້ມູນຈາກການສະໝັກຂອງທ່ານ ເພື່ອກວດເບິ່ງການມີສິດໄດ້ຮັບຂອງທ່ານ ເພື່ອຊ່ວຍໃນການຊໍາລະການຄຸ້ມຄອງສຸຂະພາບຂອງທ່ານ. ຄາວຕີ້ຈະກວດເບິ່ງຄໍາຕອບຂອງທ່ານໂດຍການໃຊ້ຂໍ້ມູນຢູ່ໃນຖານຂໍ້ມູນທາງອີເລັກໂຕຣນິກຂອງລັດ ແລະລັດຖະບານກາງ ແລະຖານຂໍ້ມູນຈາກໜ່ວຍງານລາຍຮັບພາຍໃນ (IRS), ອົງການປະກັນສັງຄົມ, ກະຊວງປ້ອງກັນຄວາມສະຫງົບ, ແລະ/ຫຼືອົງການລາຍງານຜູ້ບໍລິໂພກ. ຖ້າຂໍ້ມູນບໍ່ຖືກຄູ່ກັນ, ຄາວຕີ້ອາດຈະບອກໃຫ້ທ່ານສົ່ງຫຼັກຖານໃຫ້ເຂົາເຈົ້າ.

## ການຫ້າມຈໍາແນກຄວາມແຕກຕ່າງ

ເປັນນະໂຍບາຍຂອງລັດ ແລະຂອງຄາວຕີ້ ທີ່ທຸກຄົນຈະຕ້ອງໄດ້ຮັບການປະຕິບັດຕໍ່ຢ່າງສະເໝີພາບ, ແລະດ້ວຍຄວາມນັບຖື ແລະກຽດສັກສີ. ອີງຕາມກົດໝາຍຂອງລັດຖະບານກາງ ແລະ ນະໂຍບາຍຂອງກະຊວງກະເສດຂອງສະຫະລັດ (USDA) ແລ້ວ, ຫ້າມເດັດຂາດບໍ່ໃຫ້ມີການຈໍາແນກຄວາມແຕກຕ່າງບົນພື້ນຖານເຊື້ອຊາດ, ສີຜິວ, ຊາດກໍາເນີດ, ເພດ, ອາຍຸ, ສາສະໜາ, ຄວາມເຊື່ອທາງການເມືອງ, ຫຼືຄວາມພິການ.

ເພື່ອຍື່ນການຮຽກຮ້ອງຕໍ່ການຈໍາແນກຄວາມແຕກຕ່າງ, ໃຫ້ຕິດຕໍ່ຫາຜູ້ປະສານງານສິດທິພົນລະເມືອງຂອງຄາວຕີ້ຂອງທ່ານ, ຫຼືຂຽນໜັງສືຫາ ຫຼືໂທຫາ USDA ຫຼືກົມບໍລິການສັງຄົມຂອງລັດຄາລິຟໍເນຍ (CDSS) ທີ່:

USDA, Director
Office of Civil Rights, Room 326-W
Whitten Building
1400 Independence Ave.
Washington D.C.  20250-9410
1-202-720-5964 (ສຽງ ແລະລະບົບ TDD)

CDSS
Civil Rights Bureau
P.O. BOX 944243, M.S. 8-16-70
Sacramento, CA  94244-2430
1-866-741-6241 (ໂທເກັບເງິນປາຍທາງ)

USDA ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ.

## ກົດລະບຽບການເຮັດວຽກສໍາລັບ CalFresh

ຄາວຕີ້ອາດຈະມອບໝາຍທ່ານໃຫ້ກັບໂຄງການວຽກ. ເຂົາເຈົ້າຈະບອກວ່າທ່ານວ່າ ມັນເປັນແບບສະໝັກໃຈບໍ ຫຼືທ່ານຕ້ອງເຮັດໂຄງການວຽກ. ຖ້າທ່ານມີກິດຈະກໍາວຽກທີ່ຕ້ອງໄດ້ເຮັດ ແລະທ່ານບໍ່ເຮັດມັນ, ເງິນຊ່ວຍເຫຼືອຂອງທ່ານອາດຈະຖືກຫຼຸດລົງ ຫຼືຖືກຢຸດ.

ທ່ານອາດຈະບໍ່ມີສິດໄດ້ຮັບ CalFresh ຖ້າທ່ານໄດ້ລາອອກຈາກວຽກໄປເມື່ອບໍ່ດົນມານີ້.

**ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້**

## ກົດລະບຽບການເຮັດວຽກສໍາລັບ CalWORKs (Welfare-to-Work - ສະຫວັດດີການເຮັດວຽກ)

ຖ້າທ່ານໄດ້ຮັບການຊ່ວຍເຫຼືອເງິນສົດ, ທ່ານຕ້ອງເຂົ້າຮ່ວມໃນ Welfare-to-Work (WTW) (ສະຫວັດດີການເຮັດວຽກ) ນອກຈາກວ່າທ່ານໄດ້ຮັບການຍົກເວັ້ນ. ຄາວຕີ້ຈະບອກໃຫ້ທ່ານຮູ້ ຖ້າທ່ານໄດ້ຮັບການຍົກເວັ້ນຈາກ WTW. ຖ້າທ່ານບໍ່ເຮັດກິດຈະກໍາຂອງທ່ານທີ່ມອບໝາຍໃຫ້ເຮັດນັ້ນ, ເງິນຊ່ວຍເຫຼືອຂອງທ່ານອາດຈະຖືກຫຼຸດລົງ ຫຼືຖືກຢຸດ.

## CalWORKs - ການແປະໂປ້/ການຖ່າຍຮູບ

ສະມາຊິກຄອບຄົວຜູ້ໃຫຍ່ທີ່ມີສິດຕໍ່ການຊ່ວຍເຫຼືອເງິນສົດທຸກຄົນຕ້ອງໄດ້ແປະໂປ້/ຖ່າຍຮູບ. ຖ້າຜູ້ໃດຜູ້ໜຶ່ງ ຜູ້ທີ່ຕ້ອງໄດ້ຮ່ວມມືກັບບັນດາກົດລະບຽບເຫຼົ່ານີ້ບໍ່ໄດ້ແປະໂປ້/ຖ່າຍຮູບ, ຈະບໍ່ມີການອອກເງິນຊ່ວຍເຫຼືອໃຫ້ກັບທັງໝົດຄອບຄົວ. ລາຍນິ້ວມື/ຮູບຖ່າຍຈະເປັນຄວາມລັບ ແລະສາມາດນໍາໄປໃຊ້ແຕ່ເພື່ອປ້ອງກັນ ຫຼືດໍາເນີນການສໍ້ໂກງສະຫວັດດີການເທົ່ານັ້ນ.

## ຂ້ອຍຈະເອົາ/ໃຊ້ເງິນຊ່ວຍເຫຼືອຂອງຂ້ອຍໄດ້ແນວໃດ?

### CalFresh ແລະການຊ່ວຍເຫຼືອເງິນສົດ:

- ຄາວຕີ້ຈະສົ່ງ ຫຼືເອົາບັດການໂອນຜົນປະໂຫຍດທາງອີເລັກໂຕຼນິກ (EBT) ທີ່ເປັນປລາສຕິກໃຫ້ກັບທ່ານ. ເງິນຊ່ວຍເຫຼືອແມ່ນຈະເອົາໃສ່ໄວ້ໃນບັດ ເມື່ອການສະໝັກຂອງທ່ານໄດ້ຮັບການອະນຸມັດ. ລົງລາຍເຊັນໃສ່ບັດຂອງທ່ານ ເມື່ອທ່ານໄດ້ຮັບມັນ. ທ່ານຈະຕັ້ງໝາຍເລກລະຫັດປະຈໍາຕົວ (PIN) ໃສ່ ເພື່ອຖອນເອົາເງິນສົດຈາກຕູ້ ATM ຫຼືເພື່ອຊື້ອາຫານ ແລະ/ຫຼືລາຍການອື່ນໆ.
- ຖ້າບັດ EBT ຂອງທ່ານເສຍ, ຖືກລັກ, ໄດ້ຮັບຄວາມເສຍຫາຍ ຫຼືທ່ານຄິດວ່າອາດຈະມີຜູ້ຮູ້ຈັກເລກ PIN ຂອງທ່ານ ທີ່ທ່ານບໍ່ຕ້ອງການໃຫ້ມີການໃຊ້ເງິນຊ່ວຍເຫຼືອຂອງທ່ານ ໃຫ້ໂທຫາ (877) 328-9677 ຫຼືໂທຫາຄາວຕີ້ທັນທີ ເພື່ອແຈ້ງ ແລະປ່ຽນເລກ PIN ຂອງທ່ານ. ໃຫ້ແນ່ໃຈວ່າ ຜູ້ໃຫຍ່ທີ່ມີຄວາມຮັບຜິດຊອບທຸກຄົນ ແລະຜູ້ຕາງໜ້າທີ່ໄດ້ຮັບສິດຂອງທ່ານຮູ້ຈັກວິທີລາຍງານບັນຫາໃດໜຶ່ງເຫຼົ່ານັ້ນທັນທີ. ເງິນຊ່ວຍເຫຼືອໃດໜຶ່ງທີ່ຖືກຖອນອອກໄປຈາກບັນຊີຂອງທ່ານກ່ອນທ່ານລາຍງານບັດ EBT ຫຼື PIN ເສຍ ຫຼືຖືກລັກແມ່ນຈະ**ບໍ່**ຖືກແທນຄືນໃຫ້.
- ທ່ານສາມາດໃຊ້ເງິນຊ່ວຍເຫຼືອ CalFresh ຊື້ອາຫານເກືອບທຸກຊະນິດໄດ້, ເຊັ່ນດຽວກັບເມັດພັນ ແລະຕົ້ນໄມ້ ເພື່ອປູກເປັນອາຫານຂອງຕົນເອງໄດ້. ທ່ານບໍ່ສາມາດຊື້ເຫຼົ້າ, ຢາສູບ, ອາຫານສັດລ້ຽງ, ອາຫານສໍາເລັດຮູບບາງຊະນິດ, ຫຼືສິ່ງໃດໜຶ່ງທີ່ບໍ່ແມ່ນອາຫານໄດ້ (ເຊັ່ນ: ຢາຖູແຂ້ວ, ສະບູ່, ຫຼືເຈ້ຍອະນາໄມ).
- ເງິນຊ່ວຍເຫຼືອ CalFresh ແມ່ນທາງຮ້ານຄ້າສ່ວນໃຫຍ່ ແລະສະຖານທີ່ອື່ນໆທີ່ຂາຍອາຫານຮັບເອົາ. ການຊ່ວຍເຫຼືອເງິນສົດແມ່ນສາມາດໃຊ້ຢູ່ໃນເກືອບທຸກຮ້ານ ແລະເກືອບທຸກຕູ້ ATM. ຕູ້ ATM ບາງຕູ້ອາດຈະເກັບຄ່າທໍານຽມ. ຍັງອາດຈະມີຄ່າທໍານຽມ ຖ້າທ່ານໃຊ້ ATM ເພື່ອຖອນເງິນສົດຫຼັງຈາກທ່ານຖອນສາມຄັ້ງແລ້ວ. ສໍາລັບບັນຊີຂອງທີ່ຕັ້ງໃກ້ກັບທ່ານທີ່ຮັບບັດ EBT, ກະລຸນາເບິ່ງທີ່: https://www.ebt.ca.gov ຫຼື https://www.snapfresh.org. ທ່ານຍັງສາມາດຊອກຫາບ່ອນທີ່ທ່ານສາມາດຖອນເງິນສົດໂດຍບໍ່ເສຍຄ່າທໍານຽມໄດ້.
- ເງິນຊ່ວຍເຫຼືອ CalFresh ແມ່ນພຽງແຕ່ສໍາລັບທ່ານ ແລະສະມາຊິກຄອບຄົວຂອງທ່ານເທົ່ານັ້ນ. ການຊ່ວຍເຫຼືອເງິນສົດຂອງທ່ານແມ່ນພຽງແຕ່ ສໍາລັບທ່ານ ແລະສະມາຊິກຄອບຄົວຂອງທ່ານ ຜູ້ທີ່ໄດ້ຮັບການອະນຸມັດສໍາລັບການຊ່ວຍເຫຼືອເງິນສົດເທົ່ານັ້ນ. ການຊ່ວຍເຫຼືອເງິນສົດຂອງທ່ານແມ່ນເພື່ອຊ່ວຍໃຫ້ບັນລຸໄດ້ຕາມຄວາມຕ້ອງການພື້ນຖານຂອງຄອບຄົວຂອງທ່ານ (ທີ່ພັກອາໄສ, ອາຫານ, ເຄື່ອງນຸ່ງຫົ່ມ, ອື່ນໆ). ຮັກສາເງິນຊ່ວຍເຫຼືອຂອງທ່ານໃຫ້ປອດໄພ. ຢ່າເອົາເລກ PIN ຂອງທ່ານໃຫ້ຜູ້ອື່ນ. ຢ່າເກັບເລກ PIN ຂອງທ່ານໄວ້ກັບບັດ EBT ຂອງທ່ານ.
- ການໃຊ້ບັດ EBT ເພື່ອການໃດໜຶ່ງໂດຍທ່ານ, ສະມາຊິກຄອບຄົວ, ຜູ້ຕາງໜ້າທີ່ໄດ້ຮັບສິດຂອງທ່ານ, ຫຼືບຸກຄົນໃດໜຶ່ງທີ່ທ່ານເອົາບັດ EBT ແລະເລກ PIN ໃຫ້ດ້ວຍຄວາມສະໝັກໃຈ ແມ່ນຈະຖືກພິຈາລະນາວ່າທ່ານອະນຸມັດໃຫ້ ແລະເງິນຊ່ວຍເຫຼືອໃດໜຶ່ງທີ່ຖືກຖອນອອກໄປຈາກບັນຊີຂອງທ່ານຈະ**ບໍ່**ຖືກແທນຄືນໃຫ້.

### Medi-Cal ແລະ Health Care (ການດູແລສຸຂະພາບ):

- ສໍາລັບ Medi-Cal, ທ່ານຈະໄດ້ຮັບບັດກໍານົດເງິນຊ່ວຍເຫຼືອ (BIC).
  - ເຊັນໃສ່ບັດ BIC ຂອງທ່ານ ເມື່ອທ່ານໄດ້ຮັບມັນ ແລະໃຊ້ມັນພຽງແຕ່ເພື່ອໃຫ້ໄດ້ຮັບການບໍລິການດູແລສຸຂະພາບທີ່ຈໍາເປັນເທົ່ານັ້ນ.
  - ຢ່າໂຍນບັດ BIC ຂອງທ່ານຖິ້ມ (ນອກຈາກວ່າ ພວກເຮົາເອົາບັດ BIC ໃໝ່ໃຫ້ທ່ານ). ທ່ານຍັງຈໍາເປັນຕ້ອງຮັກສາບັດ BIC ຂອງທ່ານ ແມ້ວ່າທ່ານໝົດການໄດ້ຮັບ Medi-Cal ແລ້ວກໍ່ຕາມ. ທ່ານຍັງສາມາດໃຊ້ບັດ BIC ດຽວກັນໄດ້ ຖ້າທ່ານໄດ້ຮັບການຊ່ວຍເຫຼືອເງິນສົດ ຫຼື Medi-Cal ອີກ.
  - ນໍາເອົາບັດ BIC ໄປຫາຜູ້ໃຫ້ບໍລິການທາງການແພດ ເມື່ອທ່ານ ຫຼືສະມາຊິກຄອບຄົວບໍ່ສະບາຍ ຫຼືມີການນັດໝາຍໄປພົບ.
  - ນໍາເອົາບັດ BIC ໄປຫາຜູ້ບໍລິການທາງການແພດ ຜູ້ທີ່ປິ່ນປົວທ່ານ ຫຼືສະມາຊິກຄອບຄົວຂອງທ່ານຢູ່ໃນກໍລະນີສຸກເສີນທັນທີທີ່ເປັນໄປໄດ້ ຫຼັງຈາກການສຸກເສີນນັ້ນ.
- ສໍາລັບໂຄງການດູແລສຸຂະພາບອື່ນ, ທ່ານຈະໄດ້ຮັບບັດແຜນປະກັນໄພສຸຂະພາບຈາກຜູ້ໃຫ້ການປະກັນໄພສະເພາະຂອງທ່ານ.

### ໂຄງການຊ່ວຍເຫຼືອທົ່ວໄປ ແລະໂຄງການບັນເທົາທຸກທົ່ວໄປ:

- ໂຄງການຊ່ວຍເຫຼືອທົ່ວໄປ ແລະໂຄງການບັນເທົາທຸກທົ່ວໄປແມ່ນໂຄງການທີ່ດໍາເນີນການໂດຍຄາວຕີ້ສໍາລັບຜູ້ໃຫຍ່ທີ່ບໍ່ມີລູກ. ຄາວຕີ້ຈະບອກທ່ານກ່ຽວກັບສິດທິແລະຄວາມຮັບຜິດຊອບຕ່າງໆ ແລະກົດລະບຽບໂຄງການ ຖ້າວ່າ ທ່ານກໍາລັງສະໝັກຂໍຮັບໂຄງການໃດໜຶ່ງເຫຼົ່ານີ້.

**ຈົ່ງເອົາ ແລະເກັບຮັກສາບັນທຶກຂອງທ່ານໄວ້**

ກະລຸນາໃຊ້ໝຶກສີດຳ ຫຼືສີຟ້າ ເພາະວ່າຈະອ່ານໄດ້ງ່າຍ ແລະກັອບປີ້ໄດ້ດີທີ່ສຸດ. ກະລຸນາຂຽນຄຳຕອບຂອງທ່ານ.
ຖ້າທ່ານຕ້ອງການຊ່ອງຫວ່າງເພີ່ມເພື່ອຕອບຄຳຖາມ, ໃຫ້ຂຽນໃສ່ເຈ້ຍໃບໃໝ່ ແລ້ວເອົາຕິດຂັດມານຳ ເພື່ອໃຫ້ຂໍ້ມູນ. ໃຫ້ບອກໃຫ້ຮູ້ວ່າ ທ່ານຂຽນຄຳຕອບເພີ່ມເຕີມໃສ່ເຈ້ຍເພີ່ມນັ້ນແມ່ນສຳລັບຄຳຖາມໃດ.

## 1. ຂໍ້ມູນຂອງຜູ້ສະໝັກ

| ຊື່ (ທຳອິດ, ກາງ, ນາມສະກຸນ) | | ຊື່ອື່ນໆ (ນາງສາວ, ຊື່ນ້ອຍ, ອື່ນໆ) | | ເລກປະກັນສັງຄົມ (ຖ້າທ່ານມີ ແລະ ກຳລັງສະໝັກຂອງເງິນຊ່ວຍເຫຼືອ) | |
|---|---|---|---|---|---|
| ທີ່ຢູ່ ແລະເສັ້ນທາງໄປຫາບ້ານຂອງທ່ານ | ອາພາດເມັ້ນ # | ເມືອງ | ຄາວຕີ້ | ລັດ | ລະຫັດໄປສະນີ |
| ທີ່ຢູ່ໄປສະນີ (ຖ້າແຕກຕ່າງຈາກຂ້າງເທິງ) | ອາພາດເມັ້ນ # | ເມືອງ | ຄາວຕີ້ | ລັດ | ລະຫັດໄປສະນີ |

ຂ້ອຍຢາກໄດ້ຂໍ້ມູນກ່ຽວກັບໃບສະໝັກນີ້ໂດຍທາງອີເມລ໌ ☐ ແມ່ນແລ້ວ ☐ ບໍ່ແມ່ນ
ຂ້ອຍຢາກໄດ້ຂໍ້ຄວາມກ່ຽວກັບສຳນວນຂອງຂ້ອຍໂດຍທາງອີເມລ໌. ☐ ແມ່ນແລ້ວ ☐ ບໍ່ແມ່ນ

| ໂທລະສັບບ້ານ | ໂທລະສັບບ່ອນເຮັດວຽກ/ສຳຮອງ/ຂໍ້ຄວາມ | ທີ່ຢູ່ອີເມລ໌ |
|---|---|---|
| | | |

ທ່ານກຳລັງສະໝັກໂຄງການໃດ?
☐ CalFresh ☐ Cash Aid (ການຊ່ວຍເຫຼືອເງິນສົດ)
☐ Health Coverage (ການຄຸ້ມຄອງສຸຂະພາບ) ☐ ອື່ນໆ____________

ທ່ານມີຄວາມພິການ ແລະຕ້ອງການຄວາມຊ່ວຍເຫຼືອໃນການສະໝັກບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ

ທ່ານເປັນຄົນບໍ່ມີບ້ານບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ **ແມ່ນແລ້ວ,** ກະລຸນາບອກໃຫ້ຄາວຕີ້ຮູ້ທັນທີ ຖ້າທ່ານທ່ານບໍ່ມີບ້ານ, ເພື່ອເຂົາເຈົ້າຈະສາມາດຊ່ວຍທ່ານຫາວິທີໃສ່ທີ່ຢູ່ ເພື່ອຍອມຮັບເອົາໃບສະໝັກຂອງທ່ານ ແລະໄດ້ຮັບແຈ້ງການຈາກຄາວຕີ້ກ່ຽວກັບສຳນວນຂອງທ່ານ.

ທ່ານຢາກຈະອ່ານເປັນພາສາໃດ (ຖ້າບໍ່ແມ່ນພາສາອັງກິດ)?___________________________
ທ່ານຢາກຈະເວົ້າເປັນພາສາໃດ (ຖ້າບໍ່ແມ່ນພາສາອັງກິດ)?___________________________

ຄາວຕີ້ຈະຈັດຜູ້ແປພາສາໃຫ້ທ່ານ ໂດຍທີ່ທ່ານບໍ່ຕ້ອງເສຍຄ່າ. ຖ້າທ່ານຫູໜວກ ຫຼືຫູຕຶງ ກະລຸນາກວດເບິ່ງທີ່ນີ້ ☐

| | | | |
|---|---|---|---|
| ລາຍໄດ້ລວມຂອງຄອບຄົວຂອງທ່ານໜ້ອຍກວ່າ $150 ແລະເງິນສົດທີ່ມີ, ບັນຊີກະແສລາຍວັນ ແລະ ປະຢັດມີເງິນ $100 ຫຼືໜ້ອຍກວ່ານັ້ນບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ | ສິ່ງອຳນວຍຄວາມສະດວກຕ່າງໆຂອງທ່ານຖືກຕັດ ຫຼືທ່ານໄດ້ຮັບໃບແຈ້ງໃຫ້ຕັດບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ |
| ລາຍໄດ້ລວມຮ່ວມກັນຂອງຄອບຄົວຂອງທ່ານ ແລະຊັບສິນທີ່ຈ່າຍໄດ້ໜ້ອຍກວ່າ ຄ່າເຊົ່າ/ຄ່າຜ່ອນບ້ານ ແລະສິ່ງອຳນວຍຄວາມສະດວກຕ່າງໆຮ່ວມກັນບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ | ອາຫານຂອງທ່ານຈະໝົດໃນ 3 ວັນ ຫຼືໄວກວ່ານັ້ນບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ |
| ພວກຂອງທ່ານເປັນຄອບຄົວຜູ້ຍົກຍ້າຍ/ຊາວກະສິກອນເຮັດວຽກຕາມລະດູການ ໂດຍທີ່ມີຊັບສິນແລກເປັນເງິນໄດ້ບໍ່ເກີນ $100 ບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ | ທ່ານຕ້ອງການຄວາມຊ່ວຍເຫຼືອໃນການເດີນທາງໄປເອົາອາຫານ, ເຄື່ອງນຸ່ງຫົ່ມ, ການດູແລທາງການແພດ, ຫຼືລາຍການສຸກເສີນອື່ນໆບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ |
| ທ່ານໄດ້ຮັບແຈ້ງການໃຫ້ໄລ່ອອກຈາກບ່ອນຢູ່ ຫຼືແຈ້ງການໃຫ້ຈ່າຍຄ່າເຊົ່າ ຫຼືໃຫ້ຍ້າຍອອກໄປບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ | ທ່ານຕ້ອງການເຄື່ອງນຸ່ງຫົ່ມທີ່ຈຳເປັນເຊັ່ນ: ຜ້າອ້ອມ ຫຼືເຄື່ອງນຸ່ງຫົ່ມສຳລັບອາກາດໜາວບໍ? | ☐ ແມ່ນແລ້ວ ☐ ບໍ່ແມ່ນ |

ມີຜູ້ໃດຖືພາບໍ? ☐ ມີ ☐ ບໍ່ມີ ຖ້າມີ, ນາງໄດ້ຮັບບັດຊ່ວຍເຫຼືອຜູ້ຍິງຖືພາ (Presumptive Eligibility card) ບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ

ມີຜູ້ໃດຢູ່ໃນເຮືອນຂອງທ່ານມີຄວາມສຸກເສີນສ່ວນຕົວບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ**ແມ່ນແລ້ວ**, ໃຫ້ໝາຍໃສ່ຫ້ອງ: ☐ ຖືພາ
☐ ຕ້ອງການທາງການແພດທັນທີ ☐ ຂົ່ມເຫັງເດັກ ☐ ຂົ່ມເຫັງໃນຄອບຄົວ ☐ ຂົ່ມເຫັງຄົນສູງອາຍຸ ☐ ຄວາມສຸກເສີນອື່ນໆທີ່ເປັນໄພຕໍ່ສຸຂະພາບ ແລະຄວາມປອດໄພ.
ອະທິບາຍ:

ໂດຍການເຊັນຊື່ໃສ່ໃບສະໝັກນີ້ພາຍໃຕ້ການລົງໂທດການກະທຳຜິດ (ໂດຍການໃຫ້ການເທັດ), ຂ້ອຍເຂົ້າໃຈວ່າ:

- ຂ້ອຍໄດ້ອ່ານ, ຫຼືມີຜູ້ອ່ານຂໍ້ມູນຢູ່ໃນໃບສະໝັກນີ້ ແລະຄຳຕອບຂອງຂ້ອຍຕໍ່ຄຳຖາມຢູ່ໃນໃບສະໝັກນີ້ໃຫ້ຟັງແລ້ວ.
- ທຸກຄຳຕອບທີ່ຂ້ອຍໄດ້ຕອບຢູ່ໃນໜ້າທີ 1 ຫາ 17 ແລະເອກະສານຊ້ອນທ້າຍ A ຫາ E ຂອງເອກະສານ SAWS 2 Plus ແມ່ນເປັນຄວາມຈິງ, ຖືກຕ້ອງ ແລະຄົບຖ້ວນຕາມຄວາມຮູ້ຄວາມສາມາດຂອງຂ້ອຍແລ້ວ.
- ຂ້ອຍໄດ້ອ່ານ ຫຼືມີຜູ້ອ່ານໃຫ້ຂ້ອຍຟັງ ແລະຂ້ອຍເຂົ້າໃຈ ແລະເຫັນດີຕໍ່ກັບສິດ ແລະຄວາມຮັບຜິດຊອບຕ່າງໆແລ້ວ (ກົດລະບຽບຂອງໂຄງການ ໜ້າທີ 1).
- ຂ້ອຍໄດ້ອ່ານ ຫຼືມີຜູ້ອ່ານໃຫ້ຂ້ອຍຟັງກ່ຽວກັບກົດລະບຽບຂອງໂຄງການ ແລະການລົງໂທດຕ່າງໆແລ້ວ (ກົດລະບຽບຂອງໂຄງການ ໜ້າທີ 2 - 4).
- ຂ້ອຍເຂົ້າໃຈວ່າ ການໃຫ້ການທີ່ຜິດ ຫຼືເຮັດໃຫ້ເຂົ້າໃຈຜິດ ຫຼືພາໃຫ້ຕີຄວາມໝາຍຜິດ, ປິດບັງ ຫຼືກົດໜ່ວງຄວາມຈິງເພື່ອເຮັດໃຫ້ມີສິດໄດ້ຮັບ ແມ່ນເປັນການສໍ້ໂກງ ແລະດັ່ງນັ້ນຂ້ອຍອາດຈະຖືກລົງໂທດພາຍໃຕ້ກົດໝາຍຂອງລັດຖະບານກາງ ຖ້າຂ້ອຍໃຫ້ຂໍ້ມູນຜິດພາດ ຫຼືບໍ່ເປັນຄວາມຈິງ. ການສໍ້ໂກງສາມາດກໍ່ໃຫ້ເກີດເປັນຄະດີອາຍາທີ່ຈະຖືກຍື່ນຟ້ອງຕໍ່ຂ້ອຍ ແລະ/ຫຼືຂ້ອຍອາດຈະຖືກຫ້າມເປັນໄລຍະເວລາໃດໜຶ່ງ (ຫຼືຕະຫຼອດຊີວິດ) ບໍ່ໃຫ້ໄດ້ຮັບເງິນຊ່ວຍເຫຼືອ CalFresh ແລະການຊ່ວຍເຫຼືອເງິນສົດ.
- ຂ້ອຍເຂົ້າໃຈວ່າ ເລກປະກັນສັງຄົມ ຫຼືສະຖານະການເຂົ້າເມືອງສຳລັບສະມາຊິກຄົວເຮືອນທີ່ສະໝັກຂໍເງິນຊ່ວຍເຫຼືອ ແມ່ນອາດຈະຖືກເອົາໃຫ້ກັບອົງການຈັດຕັ້ງຂອງລັດຖະບານທີ່ເໝາະສົມຕາມການຮຽກຮ້ອງຂອງກົດໝາຍຂອງລັດຖະບານກາງ.
- ຂ້ອຍໃຫ້ສິດກັບອົງການເມດິກາລ (Medi-Cal) ເພື່ອຕິດຕາມ ແລະເອົາເງິນຈາກການປະກັນໄພສຸຂະພາບອື່ນ, ການແກ້ໄຂທາງກົດໝາຍອື່ນ, ຫຼືບຸກຄົນທີສາມອື່ນ.

| ລາຍເຊັນຂອງຜູ້ສະໝັກ, ຍາດພີ່ນ້ອງຜູ້ດູແລ (ຫຼືສະມາຊິກຄອບຄົວຜູ້ໃຫຍ່/ຜູ້ຕາງໜ້າທີ່ໄດ້ຮັບສິດ*/ຜູ້ປົກຄອງ)<br>***ຖ້າທ່ານມີຜູ້ຕາງໜ້າທີ່ໄດ້ຮັບສິດ, ກະລຸນາຕອບຄຳຖາມທີ 2 ຢູ່ໃນໜ້າຕໍ່ໄປໃຫ້ຄົບຖ້ວນ.** | ວັນທີ |
|---|---|
| ລາຍເຊັນຂອງຜົວ/ເມຍ, ພໍ່ແມ່ອື່ນ, ຜູ້ໃຫຍ່ໃຫ້ຄວາມຊ່ວຍເຫຼືອອື່ນ, ຫຼືຄູ່ຜົວ/ເມຍທີ່ຈົດທະບຽນແລ້ວ | ວັນທີ |

## 2. ຜູ້ຕາງໜ້າທີ່ໄດ້ຮັບສິດຂອງຄອບຄົວ

ທ່ານອາດຈະໃຫ້ສິດກັບຜູ້ໃດຜູ້ໜຶ່ງທີ່ມີອາຍຸ 18 ປີ ຫຼືແກ່ກວ່ານັ້ນ ເພື່ອໃຫ້ຊ່ວຍຄອບຄົວຂອງທ່ານກ່ຽວກັບເງິນຊ່ວຍເຫຼືອ CalFresh. ບຸກຄົນນີ້ສາມາດເວົ້າແທນທ່ານໃນເວລາການສຳພາດ, ຊ່ວຍທ່ານປະກອບແບບຟອມ, ຊື້ເຄື່ອງໃຫ້ທ່ານ, ແລະລາຍງານການປ່ຽນແປງໃຫ້ກັບທ່ານ. ທ່ານຈະຕ້ອງໄດ້ຈ່າຍເງິນຊ່ວຍເຫຼືອໃດໜຶ່ງທີ່ທ່ານອາດຈະໄດ້ຮັບໂດຍຄວາມຜິດພາດເນື່ອງມາຈາກຂໍ້ມູນທີ່ຄົນຜູ້ນີ້ເອົາໃຫ້ກັບທາງຄາວຕີ້ຄືນ ແລະເງິນຊ່ວຍເຫຼືອທີ່ທ່ານບໍ່ຕ້ອງການຈະໃຫ້ໃຊ້ຈ່າຍແມ່ນຈະບໍ່ຖືກແທນຄືນໃຫ້. ຖ້າທ່ານເປັນຜູ້ຕາງໜ້າທີ່ໄດ້ຮັບສິດ ທ່ານຈຳເປັນຕ້ອງໄດ້ໃຫ້ຫຼັກຖານຂໍ້ມູນການລະບຸຕົວຂອງທ່ານ ແລະຜູ້ສະໝັກແກ່ທາງຄາວຕີ້.

ທ່ານຕ້ອງການສະເໜີຊື່ຜູ້ໃດຜູ້ໜຶ່ງ ເພື່ອຊ່ວຍໃນເລື່ອງສຳພາດ CalFresh ຂອງທ່ານບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ
ຖ້າ **ແມ່ນແລ້ວ**, ປະກອບພາກຕໍ່ໄປນີ້ໃຫ້ຄົບຖ້ວນ:

| ຊື່ຜູ້ຕາງໜ້າທີ່ໄດ້ຮັບສິດ | ເບີໂທລະສັບຜູ້ຕາງໜ້າທີ່ໄດ້ຮັບສິດ |
|---|---|
| | |

ທ່ານຕ້ອງການສະເໜີຊື່ຜູ້ໃດຜູ້ໜຶ່ງ ເພື່ອຮັບ ແລະຈ່າຍເງິນຊ່ວຍເຫຼືອ CalFresh ສຳລັບຄອບຄົວຂອງທ່ານບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ
ຖ້າ **ແມ່ນແລ້ວ**, ປະກອບພາກຕໍ່ໄປນີ້ໃຫ້ຄົບຖ້ວນ:

| ຊື່ | | ເບີໂທລະສັບ | |
|---|---|---|---|
| ທີ່ຢູ່ | ເມືອງ, | ລັດ, | ລະຫັດໄປສະນີ |

## 2a. ຜູ້ຕາງໜ້າທີ່ໄດ້ຮັບສິດປະກັນໄພສຸຂະພາບ

ທ່ານສາມາດໃຫ້ການອະນຸຍາດແກ່ຄົນທີ່ໄວ້ໃຈໄດ້ ເພື່ອໃຫ້ມາເວົ້າກ່ຽວກັບການສະໝັກຂໍປະກັນໄພສຸຂະພາບຂອງທ່ານ, ເບິ່ງຂໍ້ມູນຂອງທ່ານ, ແລະດຳເນີນການສິ່ງຕ່າງໆແທນທ່ານກ່ຽວກັບການສະໝັກຂອງທ່ານໃນພາກນີ້. ທ່ານຕ້ອງການເລືອກຜູ້ຕາງໜ້າທີ່ໄດ້ຮັບສິດສຳລັບການສະໝັກໃນສ່ວນປະກັນໄພຊີວິດຂອງທ່ານບໍ?
☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ ແມ່ນແລ້ວ, ໃຫ້ປະກັບຂໍ້ມູນໃສ່ເອກະສານຊ້ອນທ້າຍ C.

**3.** ທ່ານເປັນ ຫຼືມີສະມາຊິກຄອບຄົວຜູ້ໃດເປັນຄົນອາເມຣິກັນອິນເດຍແດງ/ຄົນພື້ນເມືອງອາລັສກ້າບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ
ຖ້າ **ແມ່ນແລ້ວ**, ແລະກຳລັງສະໝັກຂໍການດູແລສຸຂະພາບ, ກະລຸນາໄປທີ່ເອກະສານຊ້ອນທ້າຍ B ສຳລັບຄຳຖາມເພີ່ມເຕີມ.

## ເຜົ່າພັນ/ຊົນເຜົ່າ

ຂໍ້ມູນເຜົ່າພັນ ແລະຊົນເຜົ່າແມ່ນເປັນທາງເລືອກ. ໄດ້ມີການສະເໜີຂໍໃຫ້ຮັບປະກັນວ່າ ເງິນຊ່ວຍເຫຼືອແມ່ນຈະຕ້ອງເອົາໃຫ້ໂດຍບໍ່ຄຳນຶງເຖິງເຜົ່າພັນ, ສີຜິວ, ຫຼືຊາດກຳເນີດ. ຄຳຕອບຂອງທ່ານຈະບໍ່ມີຜົນກະທົບຕໍ່ການມີສິດໄດ້ຮັບ ແລະຈຳນວນເງິນຊ່ວຍເຫຼືອຂອງທ່ານ. ໝາຍເອົາທຸກຂໍ້ທີ່ຖືກກັບທ່ານ. ກົດໝາຍເວົ້າວ່າ ຄາວຕີ້ຕ້ອງບັນທຶກຊົນເຜົ່າ ແລະເຜົ່າພັນຂອງທ່ານ.

☐ ໝາຍໃສ່ຫ້ອງນີ້ ຖ້າທ່ານບໍ່ຕ້ອງການໃຫ້ຂໍ້ມູນກັບຄາວຕີ້ກ່ຽວກັບເຜົ່າພັນ ແລະຊົນເຜົ່າຂອງທ່ານ. ຖ້າທ່ານບໍ່ໃຫ້ຂໍ້ມູນ, ຄາວຕີ້ຈະປ້ອນຂໍ້ມູນນີ້ສຳລັບສະຖິຕິຜົນລະເມືອງເທົ່ານັ້ນ.

| **ຊົນເຜົ່າ** | ທ່ານເປັນຄົນເຊື້ອສາຍສະເປນ, ລາຕິນ, ຫຼືຊາດກຳເນີດສະເປນບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ | ຖ້າທ່ານເປັນຄົນເຊື້ອສາຍສະເປນ, ລາຕິນ, ທ່ານພິຈາລະນາຕົນເອງເປັນ<br>☐ ຄົນເມັກຊິກກັນ ☐ ຄົນເປີໂຕຣິການ ☐ ຄົນຄິວບາ ☐ ອື່ນໆ__________________ |
|---|---|---|

**ເຜົ່າພັນ/ເຊື້ອຊາດ**

☐ ຜິວຂາວ ☐ ຄົນອາເມຣິກັນອິນເດຍແດງ ຫຼືຄົນພື້ນເມືອງອາລັສກ້າ ☐ ຜິວດຳ ຫຼືອາເມຣິກັນອາຟຣິກັນ ☐ ອື່ນໆ ຫຼືປະສົມ __________________

☐ ອາຊີ (ຖ້າໄດ້ໝາຍເອົາ, ກະລຸນາເລືອກເອົາອັນໜຶ່ງ ຫຼືຫຼາຍອັນຕໍ່ໄປນີ້):

☐ ຟີລິບປິນ ☐ ຈີນ ☐ ຍີ່ປຸ່ນ ☐ ກຳປູເຈຍ ☐ ເກົາຫຼີ ☐ ຫວຽດນາມ ☐ ອິນເດຍອາຊີ ☐ ລາວ

☐ ອາຊີອື່ນໆ (ລະບຸ)__________________

☐ ຄົນພື້ນເມືອງຮາວາຍ ຫຼືຊາວເກາະປາຊີຟິກອື່ນໆ (ຖ້າໄດ້ໝາຍເອົາ, ກະລຸນາເລືອກເອົາອັນໜຶ່ງ ຫຼືຫຼາຍອັນຕໍ່ໄປນີ້): ☐ ຄົນພື້ນເມືອງຮາວາຍ

☐ ຄົນເກາະກວາມ ຫຼືຊຳໂມໂຣ ☐ ຄົນຊາມົວ

## 4. ຄວາມມັກໃນການສຳພາດ

ທ່ານຈຳເປັນຕ້ອງໄດ້ມີການສຳພາດກັບທາງຄາວຕີ້ ເພື່ອປຶກສາເລື່ອງໃບສະໝັກຂອງທ່ານ ແລະເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອເງິນສົດ ຫຼືເງິນຊ່ວຍເຫຼືອ CalFresh. ການສຳພາດສຳລັບ CalFresh ນັ້ນປົກກະຕິແມ່ນຈະເຮັດທາງໂທລະສັບ, ນອກຈາກວ່າ ທ່ານສາມາດສຳພາດໄດ້ເມື່ອເອົາແບບຟອມໃຫ້ກັບທາງຄາວຕີ້ດ້ວຍຕົນເອງ ຫຼືມັກທີ່ຈະເຂົ້າສຳພາດດ້ວຍຕົວເອງ. ຜູ້ສະໝັກຂໍການຊ່ວຍເຫຼືອເງິນສົດ (Cash aid) ຕ້ອງໄດ້ເຂົ້າສຳພາດດ້ວຍຕົວເອງ. ຖ້າທ່ານກຳລັງສະໝັກຂໍ CalWORK ແລະ CalFresh, ການສຳພາດ CalFresh ຂອງທ່ານຈະໄດ້ເຮັດໃນເວລາດຽວກັນກັບການສຳພາດ CalWORK ຂອງທ່ານ ໃນລະຫວ່າງຊົ່ວໂມງເຮັດວຽກປົກກະຕິ.

☐ ກະລຸນາໝາຍໃສ່ຫ້ອງນີ້ ຖ້າທ່ານຢາກຈະສຳພາດຂໍ CalFresh ດ້ວຍຕົວເອງ.

☐ ກະລຸນາໝາຍໃສ່ຫ້ອງນີ້ ຖ້າທ່ານຕ້ອງການ ການຈັດຢ່າງອື່ນໃຫ້ ເນື່ອງຈາກມີຄວາມພິການ.

## 5. ໂຄງການອື່ນໆ

ມີຜູ້ໃດຢູ່ໃນຄອບຄົວຂອງທ່ານໄດ້ຮັບການຊ່ວຍເຫຼືອທົ່ວໄປບໍ (ການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ຂັດສົນ, TANF ຊົນເຜົ່າ, Medicaid, ໂຄງການຊ່ວຍເຫຼືອອາຫານເສີມ (Supplemental Nutrition Assistance Program) [ບັດຊື້ອາຫານ (food stamps)], ການຊ່ວຍເຫຼືອທົ່ວໄປ/ການບັນເທົາທຸກທົ່ວໄປ, ອື່ນໆ)? ☐ ແມ່ນແລ້ວ ☐ ບໍ່ແມ່ນ

| ຖ້າ **ແມ່ນແລ້ວ,** ແມ່ນໃຜ? | ຢູ່ໃສ *(ຄາວຕີ້/ລັດ)?* |
|---|---|
| ຖ້າ **ແມ່ນແລ້ວ,** ແມ່ນໃຜ? | ຢູ່ໃສ *(ຄາວຕີ້/ລັດ)?* |

## 6. ຂໍ້ມູນຂອງຄອບຄົວ: ຜູ້ໃຫຍ່

ປະກອບຂໍ້ມູນຕໍ່ໄປນີ້ໃຫ້ຄົບຖ້ວນສຳລັບຜູ້ໃຫຍ່ທຸກຄົນຢູ່ໃນບ້ານ. ຖ້າກຳລັງສະໝັກຂໍການຄຸ້ມຄອງດູແລສຸຂະພາບ, ໃຫ້ລວມເອົາຜູ້ໃຫຍ່ທຸກຄົນທີ່ໄດ້ຮຽກຮ້ອງຕໍ່ລາຍໄດ້ເສຍພາສີຂອງທ່ານ. ຖ້າວ່າ ທ່ານກຳລັງສະໝັກຂໍຮັບການຊ່ວຍເຫຼືອເງິນສົດ ແລະມີຜູ້ໃຫຍ່ຫຼາຍກວ່າໜຶ່ງຄົນຢູ່ໃນເຮືອນຂອງທ່ານ ຊຶ່ງເປັນຜູ້ທີ່ກຳລັງສະໝັກຂໍຮັບການຊ່ວຍເຫຼືອເງິນສົດ ຫຼື ຜູ້ທີ່ເປັນພໍ່ແມ່ຂອງເດັກທີ່ຂໍຮັບການຊ່ວຍເຫຼືອ, ກະຣຸນາໄປທີ່ເອກະສານຊ້ອນທ້າຍ D ສຳລັບຄຳຖາມເພີ່ມເຕີມ.

**ສຳລັບຜູ້ທີ່ບໍ່ແມ່ນພົນລະເມືອງ ທີ່ທ່ານກຳລັງສະໝັກຂໍ, ກະລຸນາຕອບຄຳຖາມເພີ່ມເຕີມຂໍ້ 6e ຫາ 6f.**

| ກຳລັງສະໝັກຂໍເງິນຊ່ວຍເຫຼືອ (ໝາຍແຕ່ລະປະເພດ): CalFresh | *ການຊ່ວຍເຫຼືອເງິນສົດ | Medi-Cal ການດູແລສຸຂະພາບ | ບໍ່ມີ | **ຊື່** (ນາມສະກຸນ, ຊື່, ຕົວອັກສອນທຳອິດຊື່ກາງ) | ຄົນນັ້ນມີສ່ວນພົວພັນກັບທ່ານແນວໃດ? | **ວັນເດືອນປີເກີດ** | **ເພດ** (ຊ ຫຼື ຍ) | ສະຖານະການແຕ່ງງານ: ໂສດ | ແຕ່ງງານແລ້ວ | ແຍກທາງກັນ | ຢ່າຮ້າງ | ເປັນໝ້າຍ | ເປັນນັກຮຽນເຕັມເວລາ (ໝາຍເອົາ ຖ້າແມ່ນແລ້ວ) | ເປັນຄົນພິການ (ໝາຍເອົາ ຖ້າແມ່ນແລ້ວ) | ຕອບພຽງແຕ່ຄຳຖາມລຸ່ມນີ້ ສຳລັບແຕ່ລະຄົນທີ່ກຳລັງສະໝັກເງິນຊ່ວຍເຫຼືອ. **ພົນລະເມືອງສະຫະລັດ ຫຼື ສັນຊາດສະຫະລັດ** (ໝາຍເອົາແມ່ນ ຫຼື ບໍ່ແມ່ນ) **ຖ້າບໍ່ແມ່ນ, ຕອບຄຳຖາມຂໍ້ 6e.** | ປະກັນສັງຄົມເປັນໂຫລະສັບເປັນທາງເລືອກສຳລັບສະມາຊິກທີ່ບໍ່ໄດ້ກຳລັງຂໍເງິນຊ່ວຍເຫຼືອ. **ເລກປະກັນສັງຄົມ** |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| ☐ | ☐ | ☐ | ☐ | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |

***ການຊ່ວຍເຫຼືອດ້ານເງິນສົດຍັງລວມເຖິງ ໂຄງການຊ່ວຍເຫຼືອທົ່ວໄປ ແລະໂຄງການບັນເທົາທຸກທົ່ວໄປ.**

**6a. ທຸກໆຄົນທີ່ມີຊື່ຢູ່ໃນຄຳຖາມທີ 6 ມີຂໍ້ມູນຕິດຕໍ່ຄືກັນບໍ?** ☐ **ແມ່ນແລ້ວ** ☐ **ບໍ່ແມ່ນ ຖ້າບໍ່ແມ່ນ, ກະລຸນາຕື່ມຂໍ້ມູນຜູ້ຕິດຕໍ່ຂອງຄົນນັ້ນໃສ່ຢູ່ລຸ່ມນີ້. ຖ້າແມ່ນແລ້ວ, ກະລຸນາຂ້າມໄປຫາຄຳຖາມຕໍ່ໄປ.**

| | | | | | |
|---|---|---|---|---|---|
| ຊື່ (ທຳອິດ, ກາງ, ແລະນາມສະກຸນ) | ທີ່ຢູ່ບ້ານ (ຖະໜົນ) | ອາພາດເມັ້ນ # | ເມືອງ | ລັດ | ລະຫັດໄປສະນີ |
| ເບີໂທລະສັບບ້ານ | ທີ່ຢູ່ໄປສະນີ (ຖ້າແຕກຕ່າງຈາກຂ້າງເທິງ) | ອາພາດເມັ້ນ # | ເມືອງ | ລັດ | ລະຫັດໄປສະນີ |
| ໂທລະສັບບ່ອນເຮັດວຽກ/ສຳຮອງ/ຂໍ້ຄວາມ | ທີ່ຢູ່ອີເມລ໌ (ເປັນທາງເລືອກ) | | | | |

| | | | | | |
|---|---|---|---|---|---|
| ຊື່ (ທຳອິດ, ກາງ, ແລະນາມສະກຸນ) | ທີ່ຢູ່ບ້ານ (ຖະໜົນ) | ອາພາດເມັ້ນ # | ເມືອງ | ລັດ | ລະຫັດໄປສະນີ |
| ເບີໂທລະສັບບ້ານ | ທີ່ຢູ່ໄປສະນີ (ຖ້າແຕກຕ່າງຈາກຂ້າງເທິງ) | ອາພາດເມັ້ນ # | ເມືອງ | ລັດ | ລະຫັດໄປສະນີ |
| ໂທລະສັບບ່ອນເຮັດວຽກ/ສຳຮອງ/ຂໍ້ຄວາມ | ທີ່ຢູ່ອີເມລ໌ (ເປັນທາງເລືອກ) | | | | |

## 6. ຂໍ້ມູນຂອງຄອບຄົວ: ເດັກນ້ອຍ

ປະກອບຂໍ້ມູນຕໍ່ໄປນີ້ໃຫ້ຄົບຖ້ວນສຳລັບເດັກນ້ອຍທຸກຄົນຢູ່ໃນບ້ານ. ຖ້າກຳລັງສະໝັກຂໍການຄຸ້ມຄອງດູແລສຸຂະພາບ, ໃຫ້ລວມເອົາເດັກນ້ອຍທຸກຄົນທີ່ໄດ້ຮຽກຮ້ອງຕໍ່ເງິນພາສີ.
**ສຳລັບຜູ້ທີ່ບໍ່ແມ່ນພົນລະເມືອງ ທີ່ທ່ານກຳລັງສະໝັກຂໍ, ກະລຸນາຕອບຄຳຖາມເພີ່ມເຕີມຂໍ້ 6 ຫາ 6.**

| **ກຳລັງສະໝັກຂໍເງິນຊ່ວຍເຫຼືອ** (ໝາຍແຕ່ລະປະເພດ) | | | | **ຊື່** (ນາມສະກຸນ, ຊື່, ຕົວອັກສອນທຳອິດຊື່ກາງ) | ຄົນນັ້ນມີສ່ວນພົວພັນກັບທ່ານແນວໃດ? | **ວັນເດືອນປີເກີດ** | **ສະຖານທີ່ເກີດ** | **ເພດ** (ຊ/ຍ) | ໝາຍເອົາທຸກຂໍ້ທີ່ຖືກກັບໜຶ່ງ ຫຼື ທັງສອງຄົນຂອງພໍ່ແມ່ຂອງເດັກ | | | | | ເປັນນັກຮຽນເຕັມເວລາ (ໝາຍເອົາ ຖ້າແມ່ນແລ້ວ) | ສັກຢາກັນພະຍາດຄົບຕາມກຳນົດແລ້ວບໍ? (ໝາຍເອົາ ຖ້າແມ່ນແລ້ວ) | ຕອບພຽງແຕ່ຄຳຖາມລຸ່ມນີ້ສຳລັບແຕ່ລະຄົນທີ່ກຳລັງສະໝັກເງິນຊ່ວຍເຫຼືອ. **ພົນລະເມືອງສະຫະລັດ ຫຼື ສັນຊາດສະຫະລັດ** (ໝາຍເອົາແມ່ນ ຫຼື ບໍ່ແມ່ນ) **ຖ້າບໍ່ແມ່ນ, ຕອບຄຳຖາມຂໍ້ 6.** | ປະກັນສັງຄົມເປີດເຜີຍສັບເປັນທາງເລືອກສຳລັບສະມາຊິກທີ່ບໍ່ໄດ້ກຳລັງຂໍເງິນຊ່ວຍເຫຼືອ. **ເລກປະກັນສັງຄົມ** |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| CalFresh | ການຊ່ວຍເຫຼືອເງິນສົດ | Medi-Cal ກົດໝາຍດູແລສຸຂະພາບ | ບໍ່ມີ | | | | | | ບໍ່ໄດ້ຢູ່ໃນບ້ານ | ຫວ່າງງານ | ພິການ | ເສຍຊີວິດແລ້ວ | ບໍ່ມີ | | | | |
| ☐ | ☐ | ☐ | ☐ | | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |
| ☐ | ☐ | ☐ | ☐ | | | | | | ☐ | ☐ | ☐ | ☐ | ☐ | ☐ | ☐ | ☐ ແມ່ນແລ້ວ ☐ ບໍ່ແມ່ນ | |

## 6. ຂໍ້ມູນປະກັນສັງຄົມ

ທຸກໆຄົນທີ່ສະໝັກຂໍການຊ່ວຍເຫຼືອມີເລກປະກັນສັງຄົມບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ **ບໍ່ແມ່ນ**, ກະລຸນາຕື່ມຂໍ້ມູນໃສ່ຢູ່ລຸ່ມນີ້.
ພວກເຮົາຕ້ອງການເລກປະກັນສັງຄົມສຳລັບທຸກໆຄົນ ຜູ້ທີ່ກຳລັງສະໝັກຂໍການຊ່ວຍເຫຼືອ. ມີຂໍ້ຍົກເວັ້ນບາງອັນສຳລັບຄົນຜູ້ທີ່ຕົກເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວຫຼືອາຊະຍາກຳອື່ນໆເຊັ່ນ: ການຄ້າມະນຸດ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການເອົາເລກປະກັນສັງຄົມ ໃຫ້ໂທຫາເບີ 1-800-772-1213 ຫຼືເຂົ້າໄປອອນໄລນ໌ທີ່ www.socialsecurity.gov.

| **ຊື່** | **ເຫດຜົນທີ່ບໍ່ມີເລກປະກັນສັງຄົມ** | **ສະໝັກຂໍ ແລ້ວ** |
|---|---|---|
| | ☐ ຄົນນັ້ນແມ່ນເດັກນ້ອຍຜູ້ທີ່ອາຍຸຕໍ່າກວ່ານຶ່ງປີ.<br>☐ ມັນຂັດກັບສາສະໜາຂອງຜູ້ນັ້ນ.<br>☐ ຄົນຜູ້ນີ້ບໍ່ມີເງື່ອນໄຂຄົບຖ້ວນທີ່ຈະໄດ້ຮັບ SSN.<br>☐ ອື່ນໆ ______ | ຄົນຜູ້ນີ້ໄດ້ສະໝັກຂໍເລກປະກັນສັງຄົມແລ້ວບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ |
| | ☐ ຄົນນັ້ນແມ່ນເດັກນ້ອຍຜູ້ທີ່ອາຍຸຕໍ່າກວ່ານຶ່ງປີ.<br>☐ ມັນຂັດກັບສາສະໜາຂອງຜູ້ນັ້ນ.<br>☐ ຄົນຜູ້ນີ້ບໍ່ມີເງື່ອນໄຂຄົບຖ້ວນທີ່ຈະໄດ້ຮັບ SSN.<br>☐ ອື່ນໆ ______ | ຄົນຜູ້ນີ້ໄດ້ສະໝັກຂໍເລກປະກັນສັງຄົມແລ້ວບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ |

**6d. ມີຄົນໃດຄົນໜຶ່ງຮັບໃຊ້ຢູ່ໃນກອງທັບສະຫະລັດບໍ ຫຼືເຂົາເຈົ້າເປັນຜົວ/ເມຍ, ເປັນພໍ່ແມ່ ຫຼືເດັກນ້ອຍຂອງຄົນຜູ້ນັ້ນບໍ?** ☐ ແມ່ນແລ້ວ ☐ ບໍ່ແມ່ນ

ຖ້າ **ແມ່ນແລ້ວ**, ກະລຸນາປະກອບຂໍ້ມູນຢູ່ລຸ່ມນີ້ໃຫ້ຄົບຖ້ວນ. ຖ້າ **ບໍ່ແມ່ນ**, ກະລຸນາຂ້າມໄປຫາຄຳຖາມຕໍ່ໄປ.

| ຊື່ | ພົນລະເມືອງ ສະຫະລັດບໍ? | (✔) ສະຖານະ | ປົດປ່ອຍອອກມາ ສົມກຽດບໍ? | ວັນຮັບໃຊ້ |
|---|---|---|---|---|
| | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ໜ້າທີ່ປະຕິບັດຢູ່<br>☐ ນັກຮົບເກົ່າ<br>☐ ຜົວ/ເມຍ, ພໍ່ແມ່, ຫຼືເດັກນ້ອຍຂອງ ຄົນທີ່ມີໜ້າທີ່ປະຕິບັດຢູ່ ຫຼືນັກຮົບເກົ່າ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | |
| | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ໜ້າທີ່ປະຕິບັດຢູ່<br>☐ ນັກຮົບເກົ່າ<br>☐ ຜົວ/ເມຍ, ພໍ່ແມ່, ຫຼືເດັກນ້ອຍຂອງ ຄົນທີ່ມີໜ້າທີ່ປະຕິບັດຢູ່ ຫຼືນັກຮົບເກົ່າ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | |

**6e. ຂໍ້ມູນຜູ້ທີ່ບໍ່ແມ່ນພົນລະເມືອງ -** ກະລຸນາຕອບໃຫ້ຄົບຖ້ວນສຳລັບຜູ້ທີ່ບໍ່ແມ່ນພົນລະເມືອງ ທີ່ທ່ານກຳລັງຂໍ.

| ຊື່ | **ວັນທີເຂົ້າມາໃນ ສະຫະລັດ** (ຖ້າຮູ້ຈັກ) | **ຄົນຜູ້ນີ້ມີສະຖານະການເຂົ້າເມືອງທີ່ຖືກຕ້ອງບໍ? ຖ້າແມ່ນແລ້ວ, ກະລຸນາໃຫ້ເອກະສານ ແລະໝາຍເລກການເຂົ້າເມືອງຂອງເຂົາເຈົ້າ.** | **ຄົນຜູ້ນີ້ດຳລົງຊີວິດຢູ່ໃນສະຫະລັດຕໍ່ເນື່ອງມາຕັ້ງແຕ່ປີ 1996 ບໍ?** | **ຄົນຜູ້ນີ້ເປັນພົນລະເມືອງທີ່ເດັ່ນຊາດບໍ?** | **ໄດ້ຮັບການສະໜັບສະໜູນບໍ?** (ໝາຍໃສ່ແມ່ນແລ້ວ ຫຼືບໍ່ແມ່ນ) **ຖ້າແມ່ນແລ້ວ, ຕອບຄຳຖາມ 6f** |
|---|---|---|---|---|---|
| | | ປະເພດເອກະສານ:<br>ເລກທີເອກະສານ: | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ |
| | | ປະເພດເອກະສານ:<br>ເລກທີເອກະສານ: | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ |
| | | ປະເພດເອກະສານ:<br>ເລກທີເອກະສານ: | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ | ☐ ແມ່ນແລ້ວ<br>☐ ບໍ່ແມ່ນ |

ມີຜູ້ໃດຢູ່ໃນລາຍຊື່ຂ້າງເທິງມີປະຫວັດການເຮັດວຽກຢ່າງໜ້ອຍ 10 ປີ *(40 ງວດ)* ບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ

ຖ້າ **ແມ່ນແລ້ວ**, ແມ່ນໃຜ? ______________________________________________

ມີຜູ້ໃດຢູ່ໃນລາຍຊື່ຂ້າງເທິງໄດ້, ຫຼືເຂົາເຈົ້າໄດ້ສະໝັກຂໍ T-Visa ຫຼື U-Visa, ການຮ້ອງຂໍ VAWA ບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ

ຖ້າ **ແມ່ນແລ້ວ**, ແມ່ນໃຜ? ______________________________________________

ມີຜູ້ໃດໄດ້ປ່ຽນສະຖານະການເຂົ້າເມືອງຢູ່ໃນ 12 ເດືອນຜ່ານມາບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ

ຖ້າ **ແມ່ນແລ້ວ**, ກະລຸນາປະກອບຂໍ້ມູນຢູ່ລຸ່ມນີ້ໃຫ້ຄົບຖ້ວນ.

ຖ້າ **ບໍ່ແມ່ນ,** ກະລຸນາຂ້າມໄປຫາຄຳຖາມຕໍ່ໄປ.

| | | | |
|---|---|---|---|
| ຊື່ | ມີອັນໃດຖືກປ່ຽນແປງ? | ວັນທີປ່ຽນແປງ | ໝາຍເລກຄົນຕ່າງດ້າວ (ຖ້າບອກໄດ້) |
| ຊື່ | ມີອັນໃດຖືກປ່ຽນແປງ? | ວັນທີປ່ຽນແປງ | ໝາຍເລກຄົນຕ່າງດ້າວ (ຖ້າບອກໄດ້) |

**6f. ຂໍ້ມູນຜູ້ທີ່ບໍ່ແມ່ນພົນລະເມືອງທີ່ໄດ້ຮັບການສະໜັບສະໜູນ -** ກະລຸນາຕອບສຳລັບຜູ້ທີ່ບໍ່ແມ່ນພົນລະເມືອງທີ່ໄດ້ຮັບການສະໜັບສະໜູນທີ່ທ່ານກຳລັງຂໍ.
ຜູ້ສະໜັບສະໜູນໄດ້ເຊັນໃບ I-864 ບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ **ແມ່ນແລ້ວ**, ກະລຸນາຕອບຄຳຖາມທີ່ເຫຼືອ.
ຖ້າຜູ້ໃຫ້ການສະໜັບສະໜູນໄດ້ເຊັນໃບ I-134 ແລ້ວ ຈາກນັ້ນ **ຂ້າມ** ຄຳຖາມນີ້ໄປ.

ຜູ້ໃຫ້ການສະໜັບສະໜູນຊ່ວຍເຫຼືອເງິນປົກກະຕິບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າແມ່ນແລ້ວ, ຫຼາຍປານໃດ? $ __________
ຜູ້ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນໃດອັນໜຶ່ງຕໍ່ໄປນີ້ເປັນປົກກະຕິ (ໝາຍເອົາທຸກຂໍ້ທີ່ຖືກ) ບໍ?
☐ ຄ່າເຊົ່າ ☐ ເຄື່ອງນຸ່ງ ☐ ອາຫານ ☐ ອື່ນໆ______________________________

| ຊື່ຂອງຜູ້ສະໜັບສະໜູນ | ແມ່ນໃຜເປັນຜູ້ສະໜັບສະໜູນ? | ເບີໂທລະສັບຂອງຜູ້ສະໜັບສະໜູນ |
|---|---|---|
| ຊື່ຂອງຜູ້ສະໜັບສະໜູນ | ແມ່ນໃຜເປັນຜູ້ສະໜັບສະໜູນ? | ເບີໂທລະສັບຂອງຜູ້ສະໜັບສະໜູນ |

**6g. ມີຜູ້ໃດບໍທີ່ມີຊື່ຢູ່ໃນຄຳຖາມທີ 6 ເປັນຜູ້ທີ່ມີອາຍຸຕ່ຳກວ່າ 21 ປີ ທີ່ມີພໍ່ແມ່ເປັນຜູ້ທີ່ບໍ່ຢູ່ໃນບ້ານບໍ?**
☐ ມີ ☐ ບໍ່ມີ ຖ້າ **ມີ**, ກະລຸນາຂຽນລາຍຊື່ຂອງເດັກນ້ອຍ ແລະຊື່ຂອງພໍ່ແມ່ ຜູ້ທີ່ບໍ່ຢູ່ໃນບ້ານນັ້ນ.
ຖ້າ **ບໍ່ມີ**, ກະລຸນາຂ້າມໄປຫາຄຳຖາມຕໍ່ໄປ.

| ຊື່ຂອງເດັກນ້ອຍ | ຊື່ຂອງພໍ່ແມ່ຜູ້ທີ່ບໍ່ອາໄສຢູ່ໃນບ້ານ |
|---|---|
| ຊື່ຂອງເດັກນ້ອຍ | ຊື່ຂອງພໍ່ແມ່ຜູ້ທີ່ບໍ່ອາໄສຢູ່ໃນບ້ານ |

**6h. ມີຜູ້ໃດບໍທີ່ມີໃນຄຳຖາມທີ 6 ຢູ່ກັບເດັກນ້ອຍຢ່າງໜ້ອຍໜຶ່ງຄົນທີ່ມີອາຍຸຕ່ຳກວ່າ 19 ປີ ແລະເຂົາເຈົ້າເປັນຜູ້ດູແລເດັກນ້ອຍຕົ້ນຕໍ?**
☐ ມີ ☐ ບໍ່ມີ ຖ້າ**ບໍ່ມີ**, ໃຫ້ຂ້າມໄປຫາຄຳຖາມຕໍ່ໄປ. **ຖ້າມີ, ແມ່ນໃຜ?**______________________________

**6i. ມີຜູ້ໃດບໍທີ່ມີຊື່ຢູ່ໃນຄຳຖາມທີ 6 ມີຄວາມພິການທາງດ້ານຮ່າງກາຍ, ຈິດໃຈ, ອາລົມ, ຫຼືພັດທະນາການທີ່ເຮັດໃຫ້ມີຂໍ້ຈຳກັດໃນການດຳເນີນກິດຈະກຳຕ່າງໆ (ເຊັ່ນ: ການອາບນ້ຳ, ນຸ່ງເຄື່ອງ, ກິດຈະວັດປະຈຳວັນ)?** ☐ ມີ ☐ ບໍ່ມີ ຖ້າ **ມີ**, ກະລຸນາຂຽນລາຍຊື່ຂອງຄົນທີ່ມີຄວາມພິການນັ້ນ. ຖ້າ **ບໍ່ມີ**, ກະລຸນາຂ້າມໄປຫາຄຳຖາມຕໍ່ໄປ.

ຊື່:______________________________ ຊື່:______________________________

**6j. ຂຽນໃຫ້ຄົບແຕ່ລະຄົນທີ່ພິການມີຊື່ຢູ່ໃນຄຳຖາມທີ 6.**

| | |
|---|---|
| ຊື່ຂອງເດັກນ້ອຍ | ຄົນນີ້ຕ້ອງການຄວາມຊ່ວຍເຫຼືອໃນການເຮັດກິດຈະກຳການດຳລົງຊີວິດປະຈຳວັນຜ່ານການຊ່ວຍເຫຼືອສ່ວນຕົວ ຫຼືສິ່ງອຳນວຍຄວາມສະດວກທາງການແພດບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຖ້າ**ແມ່ນແລ້ວ**, ໃຫ້ອະທິບາຍ: |
| ຄວາມພິການແມ່ນຄາດວ່າຈະແກ່ຍາວຮອດ: ☐ 30 ວັນ ຫຼືຫຼາຍກວ່າ<br>☐ 12 ເດືອນ ຫຼືຫຼາຍກວ່າ | ຄົນຜູ້ນີ້ເຮັດວຽກ ແລະມີຄ່າໃຊ້ຈ່າຍທາງການແພດທີ່ຈຳເປັນເພື່ອຊ່ວຍໃຫ້ສືບຕໍ່ເຮັດວຽກບໍ? ຕົວຢ່າງ: ລໍ້ເຂັນ, ຂາທຽມ, ອື່ນໆ.<br>☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ**ແມ່ນ**, ກະລຸນາອະທິບາຍ. |
| ຄົນຜູ້ນີ້ຕ້ອງການໃຫ້ມີການດູແລ ເພື່ອໃຫ້ຜູ້ອື່ນສາມາດໄປເຮັດວຽກ ຫຼືໄປເຂົ້າໂຮງຮຽນບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ | ຄົນຜູ້ນີ້ຢູ່ໃນສະຖານທີ່ດູແລທາງການແພດ ຫຼືບ້ານຄົນຊະລາບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຖ້າ **ແມ່ນແລ້ວ**, ສະຖານທີ່ດູແລທາງການແພດ ຫຼືບ້ານຄົນຊະລານັ້ນຊື່ຫຍັງ? |

| | |
|---|---|
| ຊື່ຂອງເດັກນ້ອຍ | ຄົນນີ້ຕ້ອງການຄວາມຊ່ວຍເຫຼືອໃນການເຮັດກິດຈະກຳການດຳລົງຊີວິດປະຈຳວັນຜ່ານການຊ່ວຍເຫຼືອສ່ວນຕົວ ຫຼືສິ່ງອຳນວຍຄວາມສະດວກທາງການແພດບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຖ້າ**ແມ່ນແລ້ວ**, ໃຫ້ອະທິບາຍ: |
| ຄວາມພິການແມ່ນຄາດວ່າຈະແກ່ຍາວຮອດ: ☐ 30 ວັນ ຫຼືຫຼາຍກວ່າ<br>☐ 12 ເດືອນ ຫຼືຫຼາຍກວ່າ | ຄົນຜູ້ນີ້ເຮັດວຽກ ແລະມີຄ່າໃຊ້ຈ່າຍທາງການແພດທີ່ຈຳເປັນເພື່ອຊ່ວຍໃຫ້ສືບຕໍ່ເຮັດວຽກບໍ? ຕົວຢ່າງ: ລໍ້ເຂັນ, ຂາທຽມ, ອື່ນໆ.<br>☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ**ແມ່ນ**, ກະລຸນາອະທິບາຍ. |
| ຄົນຜູ້ນີ້ຕ້ອງການໃຫ້ມີການດູແລ ເພື່ອໃຫ້ຜູ້ອື່ນສາມາດໄປເຮັດວຽກ ຫຼືໄປເຂົ້າໂຮງຮຽນບໍ<br>☐ ແມ່ນແລ້ວ ☐ ບໍ່ແມ່ນ | ຄົນຜູ້ນີ້ຢູ່ໃນສະຖານທີ່ດູແລທາງການແພດ ຫຼືບ້ານຄົນຊະລາບໍ? ☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຖ້າ **ແມ່ນແລ້ວ**, ສະຖານທີ່ດູແລທາງການແພດ ຫຼືບ້ານຄົນຊະລານັ້ນຊື່ຫຍັງ? |

**6k. ມີເດັກນ້ອຍ ຫຼືຄົນພິການຢູ່ໃນເຮືອນບໍ ເຊິ່ງເປັນຜູ້ທີ່ຕ້ອງການໃຫ້ມີການດູແລຈາກສະມາຊິກຄອບຄົວຜູ້ອື່ນ?**
☐ ແມ່ນແລ້ວ ☐ ບໍ່ແມ່ນ ຖ້າ **ແມ່ນແລ້ວ**, ກະລຸນາອະທິບາຍ. ຖ້າ**ບໍ່ມີ**, ໃຫ້ຂ້າມໄປຫາຄຳຖາມຕໍ່ໄປ.

**6l. ນັກຮຽນ**
**ມີຜູ້ໃດບໍກຳລັງສະໝັກຂໍເງິນຊ່ວຍເຫຼືອເຂົ້າຮຽນວິທະຍາໄລ ຫຼືໂຮງຮຽນວິຊາຊີບ?** ☐ ມີ ☐ ບໍ່ມີ
ຖ້າ **ມີ**, ກະລຸນາຕອບຄຳຖາມນີ້. ຖ້າ **ບໍ່ມີ**, ໃຫ້ຂ້າມໄປຫາຄຳຖາມຕໍ່ໄປ.

| **ຊື່ຂອງຄົນ** | **ຊື່ໂຮງຮຽນ/ການຝຶກອົບຮົມ** | **ສະຖານະທີ່ລົງທະບຽນ (ໝາຍ ✔ ເອົາອັນໜຶ່ງ)** | **ເຮັດວຽກນຳບໍ?** |
|---|---|---|---|
| | | ☐ ເຄິ່ງເວລາ ຫຼືຫຼາຍກວ່ານັ້ນ<br>☐ ໜ້ອຍກວ່າເຄິ່ງເວລາ<br>ຈຳນວນຫົວໜ່ວຍ:_________ | ຊົ່ວໂມງເຮັດວຽກສະເລ່ຍຕໍ່ອາທິດ: ________ |
| | | ☐ ເຄິ່ງເວລາ ຫຼືຫຼາຍກວ່ານັ້ນ<br>☐ ໜ້ອຍກວ່າເຄິ່ງເວລາ<br>ຈຳນວນຫົວໜ່ວຍ:_________ | ຊົ່ວໂມງເຮັດວຽກສະເລ່ຍຕໍ່ອາທິດ: ________ |

**6m. ມີຜູ້ໃດທີ່ມີຊື່ຢູ່ໃນຄຳຖາມ 6 ຫຼື 6b ຖືພາ ຫຼືເປັນພໍ່ແມ່ໜຸ່ມບໍ?** ☐ ມີ ☐ ບໍ່ມີ
ຖ້າ **ມີ**, ກະລຸນາຕອບຄຳຖາມ. ຖ້າ **ບໍ່ມີ**, ໃຫ້ຂ້າມໄປຫາຄຳຖາມຕໍ່ໄປ.

| | | | | |
|---|---|---|---|---|
| ຊື່ | ຄົນຜູ້ນີ້ມີອາຍຸຕ່ຳກວ່າ 20 ປີບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຄົນຜູ້ນີ້ເປັນພໍ່ແມ່ໜຸ່ມບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ | ສະຖານະການຮຽນ ຖ້າມີອາຍຸຕ່ຳກວ່າ 20 ປີ<br>☐ ມີໃບປະກາດຈົບຣາຍສະກູລ<br>☐ ມີໃບ GED<br>☐ ກຳລັງເຂົ້າຮຽນປົກກະຕິ<br>☐ ບໍ່ເຂົ້າຮຽນປົກກະຕິ (ອະທິບາຍວ່າ ຍ້ອນຫຍັງ): | ວັນທີຈະຈົບ (ຖ້າຮູ້ໄດ້) | ຄາດວ່າຈະມີເດັກນ້ອຍຈັກຄົນຢູ່ໃນການຖືພານີ້? |
| ຊື່ | ຄົນຜູ້ນີ້ມີອາຍຸຕ່ຳກວ່າ 20 ປີບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ<br>ຄົນຜູ້ນີ້ເປັນພໍ່ແມ່ໜຸ່ມບໍ?<br>☐ ແມ່ນແລ້ວ ☐ ບໍ່ແມ່ນ | ສະຖານະການຮຽນ ຖ້າມີອາຍຸຕ່ຳກວ່າ 20 ປີ<br>☐ ມີໃບປະກາດຈົບຣາຍສະກູລ<br>☐ ມີໃບ GED<br>☐ ກຳລັງເຂົ້າຮຽນປົກກະຕິ<br>☐ ບໍ່ເຂົ້າຮຽນປົກກະຕິ (ອະທິບາຍວ່າ ຍ້ອນຫຍັງ): | ວັນທີຈະຈົບ (ຖ້າຮູ້ໄດ້) | ຄາດວ່າຈະມີເດັກນ້ອຍຈັກຄົນຢູ່ໃນການຖືພານີ້? |

**6n. ມີຜູ້ໃດເຄີຍໄດ້ຮັບໃບບັດເງິນສົດ ຫຼືການຖືກປັບໃໝ, ຫຼືຊ່ວຍເຫຼືອການດູແລເດັກ, ການຂົນສົ່ງ ຫຼືການບໍລິການອື່ນໆຈາກໂຄງການ Cal-Learn ບໍ?** ☐ ມີ ☐ ບໍ່ມີ
ຖ້າ **ມີ**, ກະລຸນາຕອບຄຳຖາມ. ຖ້າ **ບໍ່ມີ**, ໃຫ້ຂ້າມໄປຫາຄຳຖາມຕໍ່ໄປ.

| **ຊື່** | **ຢູ່ໃສ** (ຄາວຕີ້) | **ວັນທີຮັບ** |
|---|---|---|
| | | |
| | | |

